ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 06 /ທຄຕລ 2019
ນະຄອນຫຼວງວຽງຈັນ, ວັນທີ, 10 APR 2019

# ໜັງສືແຈ້ງເຊີນ

**ຮຽນ: ທ່ານຜູ້ຖືຮຸ້ນ ຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**
**ເລື່ອງ: ເຊີນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018**

- ອີງຕາມກົດລະບຽບ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສະບັບເລກທີ 022/ທຄຕລ.2018, ລົງວັນທີ 30/07/2018.
- ອີງຕາມການຕົກລົງເຫັນດີຂອງສະມາຊິກສະພາບໍລິຫານຄັ້ງວັນທີ 18/03/2019

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍຖືເປັນກຽດຮຽນເຊີນທ່ານ ຜູ້ຖືຮຸ້ນ ທຄຕລ ເຂົ້າຮ່ວມ**ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018 ໃນວັນທີ 26/04/2019 ເວລາ 14:30 ໂມງ (ເລີ່ມລົງທະບຽນເວລາ 13:00 – 14:30 ໂມງ) ທີ່ ຫ້ອງປະຊຸມ Grand Ballroon ໂຮງແຮມແລນມາກແມ່ຂອງຣິເວີໄຊ**, ນະຄອນຫຼວງວຽງຈັນ ເພື່ອພິຈາລະນາ ແລະ ຮັບຮອງເອົາບັນຫາຕ່າງໆ ຕາມວາລະກອງປະຊຸມທີ່ຄັດຕິດມາພ້ອມນີ້.

ທຄຕລ ໄດ້ແຈ້ງໃຫ້ບໍລິສັດຕະຫຼາດຫຼັກຊັບລາວ ໃນການກຳນົດເອົາວັນທີ 01/04/2019 ເປັນມື້ປິດບັນຊີທະບຽນຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018 ແລະ ສິດໃນການຮັບເງິນປັນຜົນປະຈຳປີ 2018. ສະນັ້ນ, ທຄຕລ ຈຶ່ງຖືເອົາຕາມບັນຊີທະບຽນຜູ້ຖືຮຸ້ນຈາກບໍລິສັດຕະຫຼາດຫຼັກຊັບລາວ ເພື່ອກຳນົດສິດດັ່ງກ່າວຂອງຜູ້ຖືຮຸ້ນ.

ຜູ້ຖືຮຸ້ນແຕ່ລະທ່ານ **ຈະຕ້ອງໄປຮັບເອົາໜັງສືເຊີນປະຊຸມທີ່ລະບຸສິດຂອງທ່ານເຂົ້າໃນການເຂົ້າຮ່ວມກອງປະຊຸມ (ມີລະຫັດບາໂຄດ)** ພ້ອມເອກະສານຄັດຕິດຕ່າງໆຢູ່ຕະຫຼາດຫຼັກຊັບລາວ ເພື່ອແຈ້ງລົງທະບຽນເຂົ້າຮ່ວມກອງປະຊຸມ.

ຫວັງຢ່າງຍິ່ງວ່າ ທ່ານຄົງສະຫຼະເວລາອັນມີຄ່າເຂົ້າຮ່ວມກອງປະຊຸມຄັ້ງນີ້ດ້ວຍ.

ຮຽນເຊີນມາດ້ວຍຄວາມນັບຖືຢ່າງສູງ,

**ປະທານສະພາບໍລິຫານ**
**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

ປອ ບຸນເຫຼືອ ສິນໄຊວໍຣະວົງ



ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ. 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245, Website: www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

## ເອກະສານຄັດຕິດ

1. ວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈໍາປີ 2018 (ເອກະສານຄັດຕິດ 1)
2. ລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດມະຕິກອງປະຊຸມຄັ້ງຜ່ານມາ (ເອກະສານຄັດຕິດ 2).
3. ລາຍງານການເຄື່ອນໄຫວດໍາເນີນງານຂອງ ທຄຕລ ປະຈໍາປີ 2018 ໂດຍຫຍໍ້ (ເອກະສານຄັດຕິດ 3)
4. ບົດລາຍງານຖານະການເງິນປະຈໍາປີ 2018 ທີ່ຜ່ານການກວດສອບ (ເອກະສານຄັດຕິດ 4)
5. ແຜນການປີ 2019 (ເອກະສານຄັດຕິດ 5)
6. ບົດລາຍງານການຮ່ວມທຶນສ້າງຕັ້ງບໍລິສັດ ລາວເນເຊີນນໍ ເພເມັ້ນ ເນັດເວີກ ຈໍາກັດ (Lao National Payment Network Co., LTD) (ເອກະສານຄັດຕິດ 6)
7. ແບບຟອມໃບມອບສິດ (ເອກະສານຄັດຕິດ 7)
8. ລະບຽບສໍາລັບການດໍາເນີນ ກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈໍາປີ 2018 (ເອກະສານຄັດຕິດ 8)
9. ຄໍາແນະນໍາກ່ຽວກັບເອກະສານ ແລະ ຫຼັກຖານທີ່ຕ້ອງນໍາມາສະເໜີໂຕເພື່ອເຂົ້າຮ່ວມກອງປະຊຸມ (ເອກະສານຄັດຕິດ 9)
10. ຄໍາແນະນໍາກ່ຽວກັບການລົງຄະແນນສຽງ (ເອກະສານຄັດຕິດ 10)
11. ແຜນທີ່ສະຖານທີ່ປະຊຸມ (ເອກະສານຄັດຕິດ 11)

## ❖ ໝາຍເຫດ:

1. ຜູ້ຖືຮຸ້ນແຕ່ລະທ່ານຈະຕ້ອງໄປຮັບເອົາໜັງສືເຊີນປະຊຸມພ້ອມເອກະສານຄັດຕິດຕ່າງໆ ຢູ່ຕະຫຼາດຫຼັກຊັບລາວ ຊັ້ນ 4, ພະແນກຊໍາລະສະສາງ ແລະ ຮັບຝາກຫຼັກຊັບ, ຖະໜົນ T4, ບ້ານ ໂພນທັນເໜືອ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ໂທ (856-21 ) 454 361-4 ແຟັກ: (856-21 ) 454 360 ຫຼື ຕິດຕໍ່ໂດຍກົງກັບ **ທ້າວ ອາລຸນໄຊ ນະໄພວົງ, ໂທ (856-20) 59221136**
2. ສໍາລັບຜູ້ຖືຮຸ້ນທີ່ຈະເຂົ້າຮ່ວມປະຊຸມດ້ວຍຕົນເອງ ແລະ ຜູ້ຕາງໜ້າກະລຸນານໍາບັດປະຈໍາຕົວ ຫຼື ສໍາມະໂນຄົວ ຫຼື ໜັງສືຜ່ານແດນ (ສໍາລັບຜູ້ຖືຮຸ້ນຕ່າງປະເທດ) ມາໃນວັນປະຊຸມ ເພື່ອສະເໜີໂຕເວລາລົງທະບຽນເຂົ້າຮ່ວມກອງປະຊຸມ. ລາຍລະອຽດເອກະສານຕ່າງໆ ທີ່ຕ້ອງນໍາມາສະແດງໃນເວລາເຂົ້າຮ່ວມກອງປະຊຸມ ໄດ້ລະບຸໃວ້ໃນ ຄໍາແນະນໍາກ່ຽວກັບເອກະສານ ແລະ ຫຼັກຖານທີ່ຕ້ອງນໍາມາສະເໜີໂຕ ເພື່ອເຂົ້າຮ່ວມກອງປະຊຸມ ທີ່ຄັດຕິດມາພ້ອມນີ້.
3. ສໍາລັບຜູ້ຖືຮຸ້ນທີ່ຈະໃຫ້ຜູ້ຕາງໜ້າເຂົ້າມາຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນ, ກະລຸນາປະກອບຂໍ້ມູນພ້ອມລົງລາຍເຊັນໃນໃບມອບສິດຕາມເອກະສານທີ່ໄດ້ຂັດຕິດມາພ້ອມນີ້ ໃຫ້ຖືກຕ້ອງ ແລະ ຄົບຖ້ວນ.

## ❖ ຜູ້ປະສານງານຝ່າຍ ທຄຕລ

1) ທ່ານນາງ ພອນດາສຸກ ວົງພະຈັນ, ໂທ: 020 222 33683
2) ທ່ານນາງ ເກດແກ້ວ ສີລິວົງ, ໂທ: 020 222 82244

# ວາລະກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈໍາປີ 2018

# 26 ເມສາ 2019

**ວາລະທີ 1: ລາຍງານ ກ່ຽວກັບ ການຈັດຕັ້ງປະຕິບັດມະຕິຂອງກອງປະຊຸມຜູ້ຖືຮຸ້ນຄັ້ງຜ່ານມາ (ເອກະສານຄັດຕິດ 2)**

- ກອງປະຊຸມຜູ້ຖືຮຸ້ນ ທຄຕລ ປະຈໍາປີ 2017 ໄດ້ຈັດຂຶ້ນໃນວັນທີ 27 ເມສາ 2018, ທີ່ຫໍປະຊຸມແຫ່ງຊາດ.
- ກອງປະຊຸມມີ 9 ວາລະ ປະກອບດ້ວຍ: 2 ວາລະລາຍງານ ແລະ 7 ວາລະ ພິຈາລະນາຮັບຮອງດັ່ງນີ້:

1) ວາລະ 1 ກອງປະຊຸມ ໄດ້ຮັບຟັງລາຍງານການຈັດຕັ້ງປະຕິບັດມະຕິກອງປະຊຸມຜູ້ຖືຮຸ້ນປະຈໍາປີ 2016
2) ວາລະ 2: ກອງປະຊຸມ ໄດ້ຮັບຟັງລາຍງານສະພາບພົ້ນເດັ່ນໃນການດໍາເນີນງານຂອງ ທຄຕລ ປີ 2017
3) ວາລະ 3: ກອງປະຊຸມ ໄດ້ຮັບຮອງການຂາຍຮຸ້ນ ທຄຕລ ບ້ວງລັດຖະບານຖືຄອງ 19%.
4) ວາລະ 4 ກອງປະຊຸມ ໄດ້ຮັບຮອງຜົນການດໍາເນີນທຸລະກິດຂອງ ທຄຕລ ປະຈໍາປີ 2017
5) ວາລະ 5: ກອງປະຊຸມ ໄດ້ຮັບຮອງເງິນປັນຜົນຮຸ້ນ ທຄຕລ ປະຈໍາປີ 2017.
6) ວາລະ 6: ກອງປະຊຸມ ໄດ້ຮັບຮອງເອົາສະມາຊິກສະພາບໍລິຫານ ທຄຕລ ວາລະເຮັດວຽກປີ 2018-2020.
7) ວາລະ 7: ກອງປະຊຸມ ໄດ້ຮັບຮອງລະບຽບ ທຄຕລ ສະບັບປັບປຸງ.
8) ວາລະ 8: ກອງປະຊຸມ ໄດ້ຮັບຮອງແຜນການປະຈໍາປີ 2018 ຂອງ ທຄຕລ.
9) ວາລະ 9: ກອງປະຊຸມໄດ້ຮັບຮອງການແຕ່ງຕັ້ງຜູ້ກວດສອບ ທຄຕລ ປະຈໍາປີ 2018.

- ເຊິ່ງຕໍ່ບັນດາມະຕິຕ່າງໆທີ່ກອງປະຊຸມໄດ້ຮັບຮອງເອົານັ້ນ ທຄຕລ ໄດ້ປະຕິບັດຢ່າງສອດຄ່ອງແລ້ວ. ສໍາລັບ ວາລະທີ 3 ນັ້ນ ກະຊວງການເງິນໄດ້ມອບໃຫ້ ທຄຕລ ເປັນຜູ້ດໍາເນີນການຄົ້ນຄວ້າໃນການຂາຍຮຸ້ນ 19% ບ້ວງລັດຖະບານຖືຄອງ. ໃນການດໍາເນີນການຕົວຈິງ ທຄຕລ ໄດ້ປະສານສົມທົບກັບກະຊວງການເງິນ ແລະ ຜູ້ຄຸ້ມຄອງທຸກພາກສ່ວນຢ່າງໃກ້ຊິດ. ໄລຍະຜ່ານມາ ທຄຕລ ໄດ້ຄັດເລືອກບໍລິສັດທີ່ປຶກສາການເງິນຄໍ້າປະກັນການຈໍາໜ່ອຍຮຸ້ນ ແລະ ບໍລິສັດທີ່ປຶກສາດ້ານກົດໝາຍ ຕາມລະບຽບຂັ້ນຕອນ ຊຶ່ງໄດ້ສໍາເລັດການເຊັນສັນຍາກັບບັນດາບໍລິສັດທີ່ປຶກສາຮຽບຮ້ອຍແລ້ວ, ອີງຕາມສັນຍາດັ່ງກ່າວ ຄາດວ່າການຈໍາໜ່າຍຮຸ້ນຈະສໍາເລັດໃນໄຕມາດ 2/2019.

**ວາລະທີ 2: ລາຍງານການເຄື່ອນໄຫວດໍາເນີນງານຂອງ ທຄຕລ ປະຈໍາປີ 2018 ໂດຍຫຍໍ້ (ເອກະສານຄັດຕິດ 3)**

- ສໍາເລັດການຈັດກອງປະຊຸມສະພາບໍລິຫານສະໄໝສາມັນ 4 ຄັ້ງ, ການຈັດກອງປະຊຸມທົບທວນຜົນການດໍາເນີນທຸລະກິດ ທົ່ວລະບົບ ຈໍານວນ 4 ຄັ້ງ ແລະ ສໍາເລັດຈັດກອງປະຊຸມສາມັນຜູ້ຖືຮຸ້ນຂອງ ທຄຕລ ປະຈໍາປີ 2017 ເພື່ອຮັບຮອງບັນຫາສໍາຄັນຕ່າງໆຈໍານວນ 1 ຄັ້ງ.
- ທຄຕລ ໄດ້ ໂຮມພະແນກຄຸ້ມຄອງສາຂາເຂົ້າກັບພະແນກກວດກາພາຍໃນ ແລະ ສ້າງຕັ້ງພະແນກການຕະຫຼາດຄືນໃໝ່, ຊຶ່ງ ໂຄງຮ່າງພະແນກ/ສູນ ຂອງ ທຄຕລ ມີທັງໝົດ 14 ພະແນກ ແລະ 3 ສູນ.
- ສໍາເລັດການຂະຫຍາຍຕາໜ່າງບໍລິການ ໄດ້ 1 ສາຂາ ຄື: ສາຂາໄຊເສດຖາ, ຂະຫຍາຍໜ່ວຍບໍລິການໄດ້ທັງໝົດ 8 ໜ່ວຍບໍລິການ ແລະ ຂະຫຍາຍຕົວແທນບີຄໍາ ຈໍານວນ 190 ຕົວແທນ ໃນຂອບເຂດທົ່ວປະເທດ.

- ໃນ ປີ 2018 ທີ່ຜ່ານມາ ທຄຕລ ສາມາດຂະຫຍາຍຕູ້ ATM ໄດ້ 23 ໜ່ວຍ ລວມທັງໝົດ 388 ຕູ້, ຕູ້ຝາກເງິນແບບອັດໂຕໂນມັດ ຈຳນວນ 15 ຕູ້ ລວມທັງໝົດ 27 ຕູ້ ແລະ ເຄື່ອງຮູດ EDC ສາມາດຂະ ຫຍາຍໄດ້ 414 ເຄື່ອງ ລວມມີທັງໝົດ 2.270 ເຄື່ອງ.
- ສຳເລັດການພັດທະນາບັນດາຜະລິດຕະພັນໃໝ່ໆອອກມາຮັບໃຊ້ສັງຄົມໄດ້ຫຼາຍຜະລິດຕະພັນເຊັ່ນ: OnePay ການຊຳລະສິນຄ້າຜ່ານ QR Code, ພັດທະນາລະບົບການຊຳລະສະສາງລະຫວ່າງປະເທດດ້ວຍ QR Code (Cross Border QR Payment) ລະຫວ່າງ ທຄຕລ ແລະ ທະນາຄານທະນາຊາດໄທ, ຜະລິດຕະພັນ One Heart ທີ່ເປັນໂຄງການຊ່ວຍເຫຼືອສັງຄົມ ແລະ ພັດທະນາບໍລິການຜ່ານຕົວແທນ BCOME ໄລຍະ 02.
- ທຄຕລ ໄດ້ໄດ້ເຊັນສັນຍາຮ່ວມມື ກັບກະຊວງການເງິນ ໃນການພັດທະນາຜະລິດຕະພັນເພື່ອຮັບປະກັນການເກັບລາຍຮັບຂອງລັດຖະບານ ເຊັ່ນ: ສຳເລັດໂຄງການການຊຳລະຄ່າທຳນຽມທາງ, ໂຄງການຈັດເກັບຄ່າທຳນຽມຜູ້ໂດຍສານ ແລະ ພາຫະນະແບບອີເລັກໂທຼນິກ (Smart VAT ໄລຍະທີ 2) ຢູ່ດ່ານພາສີສາກົນຂົວມິດຕະພາບ I, ໂຄງການຊຳລະພາສີທີ່ດິນ ຜ່ານທະນາຄານ ແລະ ຜ່ານຕົວແທນບີຄຳ.
- ທຄຕລ ໄດ້ຮັບຫຼຽນໄຊອິດສະຫຼະ ຊັ້ນ II ຈຳນວນ 1 ໜ່ວຍ ເນື່ອງໃນໂອກາດວັນສ້າງຕັ້ງທະນາຄານແຫ່ງ ສປປ ລາວ ຄົບຮອບ 50 ປີ. ຜະລິດຕະພັນ BCEL OneHeart ໄດ້ຮັບລາງວັນຊະນະເລີດໃນງານ Lao ICT Award 2018 ລະດັບປະເທດຄັ້ງທີ 2, ລາງວັນການບໍລິການທີ່ດີເລີດ (Operational Excellence Award) ປະຈຳປີ 2018 ຈາກ Wells Fargo, Global Financial Institutions Payment Services, ລາງວັນດີເດັ່ນດ້ານແນວຄວາມຄິດລິເລີ່ມ ເພື່ອການເຂົ້າເຖິງບໍລິການທາງດ້ານການເງິນຢ່າງທົ່ວເຖິງປະຈຳປີ 2018 (Financial Inclusion Initiative of the Year Laos) ຈາກວາລະສານ Asian Banking and Finance ແລະ ລາງວັນດີເດັ່ນດ້ານແນວຄິດລິເລີ່ມໃນການບໍລິການດ້ານການເງິນຜ່ານລະບົບມືຖືແຫ່ງປີ 2018 (Mobile Banking Initiative of the Year Laos) ຈາກວາລະສານ Asian Banking and Finance.

**ວາລະທີ 3: ພິຈາລະນາ ແລະ ຮັບຮອງເອົາຜົນການດຳເນີນທຸລະກິດປະຈຳປີ 2018 (ເອກະສານຄັດຕິດ 4)**

ຜົນການດຳເນີນທຸລະກິດປະຈຳປີ 2018 ມາດຖານສາກົນສະເພາະກິດຈະການ ທີ່ໄດ້ຮັບການກວດສອບຈາກບໍລິສັດເອິນແອນຢັງລາວຈຳກັດ ແລະ ຮັບຮອງຈາກສະພາບໍລິຫານ ທຄຕລ ທຽບໃສ່ແຜນການປີ 2018 ມີດັ່ງນີ້:

- ຍອດຊັບສິນ/ໜີ້ສິນ: 38.942.645 ລ້ານກີບ, ທຽບໃສ່ແຜນການປີປະຕິບັດໄດ້ 100%
- ຍອດສິນເຊື່ອທັງໝົດ: 24.338.369 ລ້ານກີບ, ທຽບໃສ່ແຜນການປີປະຕິບັດໄດ້ 99%
- ຍອດເງິນຝາກທັງໝົດ: 32.968.912 ລ້ານກີບ, ທຽບໃສ່ແຜນການປີປະຕິບັດໄດ້ 100%
- ກຳໄລກ່ອນອາກອນ: 459.256 ລ້ານກີບ, ທຽບໃສ່ແຜນການປີປະຕິບັດໄດ້ລື່ນແຜນການ 15%
- ກຳໄລຫຼັງອາກອນ: 353.656 ລ້ານກີບ, ທຽບໃສ່ແຜນການປີປະຕິບັດໄດ້ລື່ນແຜນການ 16%

ສຳລັບຜົນການດຳເນີນທຸລະກິດປະຈຳປີ 2018 ມາດຖານສາກົນແບບສັງລວມກິດຈະການ ສະເໜີກອງປະຊຸມເພື່ອມອບສິດໃຫ້ສະພາບໍລິຫານ ທຄຕລ ພິຈາລະນາຮັບຮອງພາຍຫຼັງສຳເລັດການກວດສອບ.

**ວາລະທີ 4: ພິຈາລະນາ ແລະ ຮັບຮອງເງິນປັນຜົນປະຈໍາປີ 2018**

ສະເໜີຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນຈໍານວນທັງໝົດ: 205.853 ລ້ານກີບ, ຈໍານວນເງິນດັ່ງກ່າວແມ່ນໄດ້ຫັກອາກອນກໍາໄລໃນທຸລະກິດ, ສ້າງຄັງຕ່າງໆຕາມລະບຽບການແລ້ວ ແລະ ການຈ່າຍເງິນປັນຜົນເທົ່າກັບ **991 ກີບ/ຮຸ້ນ.**

ການຈ່າຍເງິນປັນຜົນຈະໄດ້ປະຕິບັດໃຫ້ສໍາເລັດຢູ່ພາຍໃນ 10 ວັນລັດຖະການຫຼັງຈາກກອງປະຊຸມຄັ້ງນີ້.

**ວາລະທີ 5: ພິຈາລະນາ ແລະ ຮັບຮອງເອົາແຜນການປີ 2019 (ເອກະສານຄັດຕິດ 5)**

ສະເໜີກອງປະຊຸມ ພິຈາລະນາ ແລະ ຮັບຮອງເອົາແຜນການ ປະຈໍາປີ 2019 ດັ່ງນີ້:

- ຍອດຊັບສິນ ເພີ່ມຂຶ້ນ: 42.742.300 ລ້ານກີບ
- ຍອດເງິນຝາກເພີ່ມຂຶ້ນ: 35.730.000 ລ້ານກີບ
- ຍອດເງິນກູ້ເພີ່ມຂຶ້ນ: 25.830.000 ລ້ານກີບ
- ກໍາໄລກ່ອນອາກອນ: 565.000 ລ້ານກີບ
- ແຜນຮັບພະນັກງານໃໝ່ ປະກອບໃຫ້ ທຄຕລ ທົ່ວລະບົບ ຈໍານວນ 200 ຄົນ,
- ແຜນການຂະຫຍາຍຕາໜ່າງບໍລິການເພີ່ມຂຶ້ນ 10 ໜ່ວຍບໍລິການ ໃນທົ່ວປະເທດ
- ແຜນການນໍາໃຊ້ທຶນເພື່ອປະກອບວັດຖຸເຕັກນິກ, ກໍ່ສ້າງ ແລະ ສ້ອມແປງ ທີ່ຄາດວ່າຈະໂອນເປັນຊັບສິນບັດຄົງທີ່ ເປັນຈໍານວນເງິນທັງໝົດ: 172.153 ລ້ານກີບ.

**ວາລະທີ 6: ພິຈາລະນາ ແລະ ຮັບຮອງເອົາຜູ້ກວດສອບອິດສະຫຼະ ປະຈໍາປີ 2019.**

ອີງຕາມການຄົ້ນຄວ້າ, ສົມທຽບເງື່ອນໄຂຕ່າງໆ ແລະ ລາຄາ, ທຄຕລ ໄດ້ເລືອກເອົາບໍລິສັດເອີນແອນຢັງລາວ ຈໍາກັດ ເປັນຜູ້ກວດສອບຖານະການເງິນ ທຄຕລ ປະຈໍາປີ 2019, ລາຄາກວດສອບ 93.000 USD (ເກົ້າສິບສາມພັນໂດລາສະຫະລັດຖ້ວນ) ລາຄາເທົ່າກັບການກວດສອບໃນປີ 2016, 2017, 2018. ການບໍລິການກວດສອບລວມມີການກວດສອບຕາມມາດຖານສາກົນ ແລະ ມາດຖານລາວ ເປັນພາສາລາວພາສາອັງກິດ, ທົບທວນຖານະການເງິນປະຈໍາ 6 ເດືອນ ແລະ ກວດສອບຖານະການເງິນປະຈໍາປີ, ພາຍໃຕ້ເງື່ອນໄຂທີ່ບໍລິສັດເອີນແອນຢັງລາວ ຈໍາກັດ ຕ້ອງປ່ຽນຜູ້ຮຸ້ນສ່ວນຮັບຜິດຊອບ (Partner) ໃນການລົງລາຍເຊັນໃນບົດລາຍງານການເງິນ ແລະ ຜູ້ຮຸ້ນສ່ວນຮັບຜິດຊອບ (Partner) ໃໝ່ ຂອງບໍລິສັດເອີນແອນຢັງລາວ ຈໍາກັດ ສາມາດດໍາເນີນການກວດສອບບັນຊີໃຫ້ ທຄຕລ ໄດ້ສູງສຸດບໍ່ເກີນ 5 ປີ (ຮອດປີ 2020).

**ວາລະທີ 7: ພິຈາລະນາ ແລະ ຮັບຮອງການລົງທຶນຂອງ ທຄຕລ ໃນການຮ່ວມສ້າງຕັ້ງບໍລິສັດ ລາວເນເຊີນນໍ ເພເມັ້ນ ເນັດເວີກ ຈໍາກັດ (Lao National Payment Network Co., LTD) (ເອກະສານຄັດຕິດ 6)**

ທຄຕລ ຈະຮ່ວມມືໃນການສ້າງຕັ້ງບໍລິສັດ ລາວ ເນເຊີນນໍ ເພເມັ້ນ ເນັດເວີກ ຈໍາກັດ ຊຶ່ງເປັນບໍລິສັດທີ່ໃຫ້ບໍລິການດ້ານລະບົບຊໍາລະສາງແບບທັນສະໄໝໃຫ້ແກ່ບັນດາທະນາຄານພາຍໃນປະເທດ ໂດຍມີບັນດາທະນາຄານທຸລະກິດພາຍໃນປະເທດຈໍານວນ 7 ແຫ່ງ ແລະ ບໍລິສັດຈາກຕ່າງປະເທດ 1 ແຫ່ງ ຮ່ວມລົງທຶນສ້າງຕັ້ງ. ຊຶ່ງ ມີທຶນຈົດທະບຽນທັງໝົດ 34.000 ລ້ານກີບ. ໃນນັ້ນ, ທຄຕລ ໄດ້ຮ່ວມລົງທຶນ 20% ຂອງຮຸ້ນທັງໝົດ ເປັນມູນຄ່າ 6.800 ລ້ານກີບ ແລະ ໄດ້ຮັບສິດໃນການແຕ່ງຕັ້ງເປັນຜູ້ອໍານວຍການບໍລິສັດ.

**ເອກະສານຄັດຕິດ 2**

# ລາຍງານ

## ຄວາມຄືບໜ້າການຈັດຕັ້ງປະຕິບັດມະຕິກອງປະຊຸມຄັ້ງຜ່ານມາ

**(ເອກະສານປະກອບວາລະ 1)**

- ກອງປະຊຸມຄັ້ງຜ່ານມາ: ວັນທີ 27 ເມສາ 2018, ທີ່ຫໍປະຊຸມແຫ່ງຊາດ.
- ມີ 9 ວາລະນຳສະເໜີໃນກອງປະຊຸມ: 2 ວາລະລາຍງານ ແລະ 7 ວາລະສະເໜີພິຈາລະນາຮັບຮອງ, ລະອຽດດັ່ງນີ້:

1. ວາລະ 1: ລາຍງານການຈັດຕັ້ງປະຕິບັດມະຕິກອງປະຊຸມຜູ້ຖືຮຸ້ນປະຈຳປີ 2016
2. ວາລະ 2: ລາຍງານສະພາບພົ້ນເດັ່ນໃນການດຳເນີນງານຂອງ ທຄຕລ ປີ 2017
3. ວາລະ 3: ກອງປະຊຸມ ໄດ້ຮັບຮອງການຂາຍຮຸ້ນ ທຄຕລ ບ້ວງລັດຖະບານຖືຄອງ 19%.
   - ການຈັດຕັ້ງປະຕິບັດ: ກະຊວງການເງິນໄດ້ມອບໃຫ້ ທຄຕລ ເປັນຜູ້ດຳເນີນການຄົ້ນຄວ້າໃນການຂາຍຮຸ້ນ 19% ບ້ວງລັດຖະບານຖືຄອງ. ໃນການດຳເນີນການຕົວຈິງ ທຄຕລ ໄດ້ປະສານສົມທົບກັບກະຊວງການເງິນ ແລະ ຜູ້ຄຸ້ມຄອງທຸກພາກສ່ວນຢ່າງໃກ້ຊິດ. ໄລຍະຜ່ານມາ ທຄຕລ ໄດ້ຄັດເລືອກບໍລິສັດທີ່ປຶກສາການເງິນ-ຄ້ຳປະກັນການຈຳໜ່ອຍຮຸ້ນ ແລະ ບໍລິສັດທີ່ປຶກສາດ້ານກົດໝາຍ ຕາມລະບຽບຂັ້ນຕອນ ຊຶ່ງໄດ້ສຳເລັດການເຊັນສັນຍາກັບບັນດາບໍລິສັດທີ່ປຶກສາຮຽບຮ້ອຍແລ້ວ, ອີງຕາມສັນຍາດັ່ງກ່າວ ຄາດວ່າການຈຳໜ່າຍຮຸ້ນຈະສຳເລັດໃນໄຕມາດ 2/2019.
4. ວາລະ 4: ກອງປະຊຸມ ໄດ້ຮັບຮອງຜົນການດຳເນີນທຸລະກິດຂອງ ທຄຕລ ປະຈຳປີ 2017
   - ການຈັດຕັ້ງປະຕິບັດ: ທຄຕລ ໄດ້ມີການລາຍງານຕົວເລກຜົນດຳເນີນທຸລະກິດດັ່ງກ່າວ ໃຫ້ຜູ້ຖືຮຸ້ນ ກໍ່ຄືສັງຄົມຮັບຊາບ ຜ່ານລະບົບເປີດເຜີຍຂໍ້ມູນຂອງຕະຫຼາດຫຼັກຊັບລາວ, ເວັບໄຊຂອງ ທຄຕລ ແລະ ປຶ້ມລາຍງານປະຈຳປີຢ່າງສອດຄ່ອງກັບລະບຽບການທີ່ກ່ຽວຂ້ອງແລ້ວ.
5. ວາລະ 5: ກອງປະຊຸມ ໄດ້ຮັບຮອງເງິນປັນຜົນຮຸ້ນ ທຄຕລ ປະຈຳປີ 2017.
   - ການຈັດຕັ້ງປະຕິບັດ: ທຄຕລ ໄດ້ຈ່າຍເງິນປັນຜົນຮຸ້ນ ທຄຕລ ຈຳນວນ 712 ກີບ/ຮຸ້ນ ໃຫ້ຜູ້ຖືຮຸ້ນສຳເລັດຕາມກຳນົດເວລາທີ່ກອງປະຊຸມຜູ້ຖືຮຸ້ນໄດ້ຮັບຮອງເອົາ ຄືພາຍໃນໃນກຳນົດ 5 ວັນລັດຖະການຫຼັງກອງປະຊຸມ.
6. ວາລະ 6: ກອງປະຊຸມ ໄດ້ຮັບຮອງເອົາສະມາຊິກສະພາບໍລິຫານ ທຄຕລ ວາລະ 2018-2020.
   - ພາຍຫຼັງທີ່ກອງປະຊຸມຜູ້ຖືຮຸ້ນ ໄດ້ຮັບຮອງເອົາສະພາບໍລິຫານ ທຄຕລ ຊຸດໃໝ່ແລ້ວ, ສະພາບໍລິຫານຊຸດໃໝ່ ກໍ່ໄດ້ດຳເນີນການຕິດຕາມ-ຊີ້ນຳ ທຄຕລ ຢ່າງໃກ້ຊິດ, ໄດ້ແຕ່ງຕັ້ງ 5 ຄະນະກຳມະການຂອງສະພາບໍລິຫານ ເຊິ່ງປະກອບດ້ວຍສະມາຊິກສະພາບໍລິຫານເປັນຄະນະກຳມະການ ຕາມລະບຽບທີ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບກຳນົດ. ສະພາບໍລິຫານ ແລະ ຄະນະກຳມະການສະພາບໍລິຫານ ໄດ້ປະຕິບັດພາລະບົດບາດຂອງຕົນໃນການຊີ້ນຳ ທຄຕລ ແລະ ມີການປະຊຸມຢ່າງເປັນປົກກະຕິ.

7. ວາລະ 7: ກອງປະຊຸມ ໄດ້ຮັບຮອງລະບຽບ ທຄຕລ ສະບັບປັບປຸງ.
    - ການຈັດຕັ້ງປະຕິບັດ: ທຄຕລ ໄດ້ເຊັນຮັບຮອງ ແລະ ປະກາດນຳໃຊ້ລະບຽບດັ່ງກ່າວ ໂດຍໄດ້ເຜີຍແຜ່ໃຫ້ພະນັກງານໃນສຳນັກງານໃຫຍ່ ແລະ ສາຂາໄດ້ເຂົ້າໃຈ ແລະ ເອົາໃຈໃສ່ໃນການຈັດຕັ້ງປະຕິບັດລະບຽບດັ່ງກ່າວ.
8. ວາລະ 8: ກອງປະຊຸມ ໄດ້ຮັບຮອງແຜນການປະຈຳປີ 2018 ຂອງ ທຄຕລ.
    - ການຈັດຕັ້ງປະຕິບັດ: ຄະນະບໍລິຫານ ທຄຕລ ໄດ້ເອົາໃຈໃສ່ໃນການດຳເນີນງານແຕ່ລະດ້ານຢ່າງມີປະສິດທິຜົນ, ເອົາໃຈໃສ່ໃນການພັດທະນາການບໍລິການ ແລະ ຜະລິດຕະພັນຕ່າງໆ, ເອົາໃຈໃສ່ວຽກງານຄຸ້ມຄອງຄວາມສ່ຽງ, ເອົາໃຈໃສ່ຄົ້ນຄວ້າສ້າງແຫຼ່ງລາຍຮັບ ແລະ ຄຸ້ມຄອງລາຍຈ່າຍ ອັນໄດ້ເຮັດໃຫ້ຜົນການດຳເນີນງານຂອງ ທຄຕລ ປະຈຳປີ 2018 ສາມາດບັນລຸແຜນການ, ເຊິ່ງຜົນດຳເນີນງານນີ້ຈະນຳສະເໜີເພື່ອຮັບຮອງໃນກອງປະຊຸມຜູ້ຖືຮຸ້ນປະຈຳປີ 2018.
9. ວາລະ 9: ກອງປະຊຸມໄດ້ຮັບຮອງການແຕ່ງຕັ້ງຜູ້ກວດສອບ ທຄຕລ ປະຈຳປີ 2018.
    - ການຈັດຕັ້ງປະຕິບັດ: ບໍລິສັດຜູ້ກວດສອບ ໄດ້ດຳເນີນການກວດສອບຖານະການເງິນຂອງ ທຄຕລ ຕາມສັນຍາ.

# ລາຍງານ

## ລາຍງານການເຄື່ອນໄຫວດຳເນີນງານຂອງ ທຄຕລ ປະຈຳປີ 2018 ໂດຍຫຍໍ້

**(ເອກະສານປະກອບວາລະ 2)**

### 1. ການເຄື່ອນໄຫວວຽກງານທີ່ພົ້ນເດັ່ນໃນປີ 2018

ໃນ ປີ 2018 ທີ່ຜ່ານມາ ທຄຕລ ໄດ້ດຳເນີນດຳເນີນງານຕາມແຜນການຕ່າງໆ ທີ່ກອງປະຊຸມຜູ້ຖືຮຸ້ນ ທຄຕລ ໄດ້ຮັບຮອງ, ຊຶ່ງໃນໄລຍະຜ່ານມາ ຄະນະຜູ້ບໍລິຫານ ທຄຕລ ໄດ້ເອົາໃຈໃສ່ປະຕິບັດໜ້າທີ່, ຊີ້ນຳນຳພາບັນດາພະແນກການ, ສູນ ແລະ ສາຂາໃນທົ່ວລະບົບໃນການປະຕິບັດໜ້າທີ່ດ້ວຍຄວາມຮັບຜິດຊອບສູງ. ພ້ອມກັນນັ້ນ, ທຄຕລ ຍັງໄດ້ຮັບການຊີ້ນຳຈາກສະພາບໍລິຫານ ແລະ ຂັ້ນເທິງຢ່າງໃກ້ຊິດເຮັດໃຫ້ ທຄຕລ ສາມາດປະຕິບັດຜົນການ ດຳເນີນງານສຳເລັດຫຼາຍດ້ານເຊັ່ນ: ສຳເລັດການຈັດກອງປະຊຸມສະພາບໍລິຫານສະໄໝສາມັນ 4 ຄັ້ງ, ສຳເລັດການຈັດ ກອງປະຊຸມທົບທວນຜົນການດຳເນີນທຸລະກິດ ທົ່ວລະບົບ ຈຳນວນ 4 ຄັ້ງ ແລະ ສຳເລັດຈັດກອງປະຊຸມສາມັນ ຜູ້ຖືຮຸ້ນຂອງ ທຄຕລ ປະຈຳປີ 2017 ເພື່ອຮັບຮອງບັນຫາສຳຄັນຕ່າງໆຈຳນວນ 1 ຄັ້ງ. ທຄຕລ ໄດ້ ໂຮມພະແນກຄຸ້ມ ຄອງສາຂາເຂົ້າກັບພະແນກກວດກາພາຍໃນ, ສ້າງຕັ້ງພະແນກການຕະຫຼາດຄືນໃໝ່ຊຶ່ງແຍກອອກຈາກພະແນກຄົ້ນຄວ້າ ແລະ ພັດທະນາ. ພ້ອມກັນນັ້ນ, ທຄຕລ ໄດ້ຂະຫຍາຍຕາໜ່າງບໍລິການເພື່ອຮັບປະກັບວຽກງານການບໍລິການສັງຄົມ ໃຫ້ທົ່ວເຖິງເຊັ່ນ: ສ້າງຕັ້ງສາຂາໄຊເສດຖາ ແລະ ຂະຫຍາຍໜ່ວຍບໍລິການໄດ້ທັງໝົດ 8 ໜ່ວຍບໍລິການ ແລະ ຂະຫຍາຍ ຕົວແທນບີຄຳ ຈຳນວນ 190 ຕົວແທນ ໃນຂອບເຂດທົ່ວປະເທດ.

ໃນໄລຍະ 1 ປີຜ່ານມາ ທຄຕລ ໄດ້ສຸມໃສ່ພັດທະນາວຽກງານບໍລິການໂດຍຫັນເປັນທັນສະໄໝຫຼາຍຂຶ້ນເພື່ອສ້າງຄວາມສະດວກ, ສະບາຍ ແລະ ຕອບສະໜອງຄວາມຕ້ອງການຂອງສັງຄົມ ຊຶ່ງໄດ້ພັດທະນາບັນດາຜະລິດຕະພັນໃໝ່ໆອອກມາຮັບໃຊ້ສັງຄົມໄດ້ຫຼາຍຜະລິດຕະພັນເຊັ່ນ: Onepay ການຊຳລະສິນຄ້າຜ່ານ QR Code, ພັດທະນາລະບົບການຊຳລະສະສາງລະຫວ່າງປະເທດດ້ວຍ QR Code (Cross Border QR Payment) ລະຫວ່າງ ທຄຕລ ແລະ ທະນາຄານທະນາຊາດໄທ, ຜະລິດຕະພັນ One Heart ທີ່ເປັນໂຄງການຊ່ວຍເຫຼືອສັງຄົມ, ໂຄງການຈັດເກັບຄ່າທຳນຽມຜູ້ໂດຍສານ ແລະ ພາຫະນະ ແບບອີເລັກໂທຼນິກ (Smart VAT ໄລຍະທີ 2) ຂອງດ່ານພາສີສາກົນຂົວມິດຕະພາບ I, ພັດທະນາບໍລິການຜ່ານຕົວແທນ BCOME ໄລຍະ 02, ພັດທະນາລະບົບ ເພື່ອໃຫ້ສາມາດຊຳລະພາສີທີ່ດິນ ຜ່ານທະນາຄານ ແລະ ເງິນຝາກມີກຳນົດ 9, 15, 18, 21, 30, 42 ເດືອນ ແລະ 54 ເດືອນ.

ຈາກຜົນງານຕ່າງໆຂ້າງເທິງນັ້ນ ພິເສດໃນປີ 2018 ທຄຕລ ໄດ້ຮັບຫຼຽນໄຊອິດສະຫຼະ ຊັ້ນ II ຈຳນວນ 1 ໜ່ວຍ ເນື່ອງໃນໂອກາດວັນສ້າງຕັ້ງທະນາຄານແຫ່ງ ສປປ ລາວ ຄົບຮອບ 50 ປີ, ຜະລິດຕະພັນ BCEL OneHeart ໄດ້ຮັບລາງວັນຊະນະເລີດໃນງານ Lao ICT Award 2018 ລະດັບປະເທດຄັ້ງທີ 2, ລາງວັນການບໍລິການທີ່ດີເລີດ (Operational Excellence Award) ປະຈຳປີ 2018 ຈາກ Wells Fargo, Global Financial Institutions Payment Services, ລາງວັນດີເດັ່ນ ດ້ານແນວຄວາມຄິດລິເລີ່ມເພື່ອການເຂົ້າເຖິງບໍລິການທາງດ້ານການເງິນຢ່າງທົ່ວເຖິງປະຈຳປີ 2018 (Financial Inclusion Initiative of the Year Laos) ຈາກວາລະສານ Asian Banking and Finance ແລະ ລາງວັນດີເດັ່ນດ້ານແນວຄິດລິເລີ່ມໃນການບໍລິການດ້ານການເງິນຜ່ານລະບົບມືຖືແຫ່ງປີ 2018 (Mobile Banking Initiative of the Year Laos) ຈາກວາລະສານ Asian Banking and Finance.

## 2. ຜົນການດຳເນີນທຸລະກິດ ໃນປີ 2018 ມາດຖານສາກົນສະເພາະກິດຈະການ ທຽບໃສ່ແຜນປີ 2018

(ສຳລັບລາຍລະອຽດ ກະລຸນາເບິ່ງເອກະສານຄັດຕິດມາພ້ອມນີ້)

- ຍອດຊັບສິນ/ໜີ້ສິນ: 38.942.645 ລ້ານກີບ, ທຽບໃສ່ແຜນການປີປະຕິບັດໄດ້ 100%
- ຍອດສິນເຊື່ອທັງໝົດ: 24.338.369 ລ້ານກີບ, ທຽບໃສ່ແຜນການປີປະຕິບັດໄດ້ 99%
- ຍອດເງິນຝາກທັງໝົດ: 32.968.912 ລ້ານກີບ, ທຽບໃສ່ແຜນການປີປະຕິບັດໄດ້ 100%
- ກຳໄລກ່ອນອາກອນ: 459.256 ລ້ານກີບ, ທຽບໃສ່ແຜນການປີປະຕິບັດໄດ້ລື່ນແຜນການ 15%
- ກຳໄລຫຼັງອາກອນ: 353.656 ລ້ານກີບ, ທຽບໃສ່ແຜນການປີປະຕິບັດໄດ້ລື່ນແຜນການ 16%

## 3. ການປະຕິບັດແຜນປະກອບອັດຖຸເຕັກນິກ, ກໍ່ສ້າງ ແລະ ສ້ອມແປງ

ການປະຕິບັດແຜນປະກອບອັດຖຸເຕັກນິກ ແລະ ກໍ່ສ້າງສ້ອມແປງ ປະຕິບັດທັງໝົດ 97.615,62 ຕື້ກວ່າກີບ ເທົ່າກັບ 53% ຂອງແຜນການປີ.

ຫົວໜ່ວຍລ້ານກີບ

| ລ/ດ | Code | ເນື້ອໃນ | ແຜນການ 2018 | | ປະຕິບັດ2018 | | | ຍອດເຫຼືອ |
|---|---|---|---|---|---|---|---|---|
| | | | ລ/ກ | ຈ/ງ | ລ/ກ | ຈ/ງ | ທຜປ | |
| | ລວມແຜນທັງໝົດ 2018 | | 7.088 | 182.817,84 | 2.954 | 97.615,62 | 53% | 85.202,22 |
| 1 | ການກໍ່ສ້າງພື້ນຖານ | | 84 | 93.683,00 | 10 | 40.576,14 | 8% | 53.106,86 |
| 2 | Program | | 1 | 1.000,00 | - | - | 0% | 1.000,00 |
| 3 | Program Others | | 5 | 13.229,50 | 3 | 327 | 2% | 12.902,17 |
| 4 | ການປະກອບພາຫານະຂົນສົ່ງ | | 27 | 3.980,70 | 21 | 2.367,05 | 59% | 1.613,65 |
| 5 | ເຄື່ອງເຢັນ ແລະ ສິ່ງຕິດຕັ້ງ | | 221 | 2.429,10 | 95 | 2.028,34 | 84% | 400,76 |
| 6 | ເຄື່ອງຈັກຮັບໃຊ້ຫ້ອງການ | | 5.637 | 61.672,24 | 2.077 | 49.153,42 | 80% | 12.518,82 |
| 7 | ເຄື່ອງຮັບໃຊ້ສຳນັກງານ ເຟີນີເຈີຕ່າງໆ | | 1.113 | 6.823,30 | 748 | 3.163,34 | 46% | 3.659,96 |

## 4. ການປະຕິບັດແຜນການ, ໂຄງການ ແລະ ແຜນວຽກ

ທຄຕລ ໄດ້ຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍບັນດາ 06 ແຜນງານຫຼັກ ,32 ໂຄງການໃຫຍ່ ຕາມແຜນຍຸດທະສາດໄລຍະຍາວ ຊຶ່ງໃນປີ :ແຜນວຽກ ດັ່ງນີ້ 222 ມີທັງໝົດ 2018

| ການປະຕິບັດແຜນງານ, ໂຄງການ ແລະ ແຜນວຽກ | ໂຄງການ | ສັດສ່ວນ | ແຜນວຽກ | ສັດສ່ວນ |
|---|---|---|---|---|
| ປະຕິບັດໄດ້ສຳເລັດ 100% ມີ: | 10 | 31% | 133 | 60% |
| ປະຕິບັດໄດ້ 90%-99% ມີ: | 7 | 22% | 10 | 5% |
| ປະຕິບັດໄດ້ 51%-89% ມີ: | 9 | 28% | 31 | 14% |
| ປະຕິບັດໄດ້ 1%-50% ມີ: | 3 | 9% | 22 | 10% |
| ໂຄງການທີ່ປະເມີນເປັນຕົວເລກບໍ່ໄດ້ | 3 | 9% | 23 | 10% |
| ແຜນວຽກບໍ່ໄດ້ປະຕິບັດ | | | 3 | 1% |
| ລວມ | 32 | 100% | 222 | 100% |

ໂດຍລວມ, ແຜນວຽກທີ່ປະຕິບັດໄດ້ໜ້ອຍ ແລະ ຍັງບໍ່ທັນໄດ້ຈັດຕັ້ງປະຕິບັດນັ້ນລ້ວນແຕ່ແມ່ນແຜນວຽກທີ່ຕິດພັນວຽກງານຂອງໂຄງການທີ່ຈະສືບຕໍ່ປະຕິບັດໃນຊຸມປີຕໍ່ໜ້າ.

## 5. ການຂະຫຍາຍຕາໜ່າງບໍລິການ

ສໍາລັບປີ 2018 ທີ່ຜ່ານມາ ທຄຕລ ສາມາດຂະຫຍາຍສາຂາໄດ້ 1 ສາຂາ ແລະ 8 ໜ່ວຍບໍລິການໃນຂອບເຂດ ທົ່ວປະເທດດັ່ງມີລາຍລະອຽດລຸ່ມນີ້:

| ລ/ດ | ແຜນຂະຫຍາຍຕ່າງໜ່າງບໍລິການ ປີ 2018 ຈໍານວນ (9 ໜ່ວຍບໍລິການ) | ພາກສ່ວນ | ໝາຍເຫດ | |
|---|---|---|---|---|
| A | **ສາຂາ** | | | |
| 1 | ສາຂາໄຊເສດຖາ | ສາຂາໄຊເສດຖາ | ປະຕິບັດແລ້ວ | 17/05/2018 |
| B | ໜ່ວຍບໍລິການຢູ່ນະຄອນຫຼວງ | | | |
| 1 | **ໜ່ວຍບໍລິການເຂດໂພນຕ້ອງ ໂຮງໝໍ 150 ຕຽງ** | | **ຍັງບໍ່ທັນໄດ້ປະຕິບັດ** | **ເປັນແຜນສືບຕໍ່ໃນປີ 2019** |
| 2 | ໜ່ວຍບໍລິການສະພານທອງ | | ປະຕິບັດແລ້ວ | 21/05/2018 |
| 3 | ໜ່ວຍບໍລິການໜອງໄຮ | | ປະຕິບັດແລ້ວ | 23/05/2018 |
| 4 | ໜ່ວຍບໍລິການໜອງດ້ວງ | | ປະຕິບັດແລ້ວ | 6/08/2018 |
| 5 | ໜ່ວຍບໍລິການສູນການຄ້າສາກົນ | | ປະຕິບັດແລ້ວ | 6/08/2018 |
| B.1 | **ໜ່ວຍບໍລິການທີ່ຂຶ້ນກັບສາຂາ** | | | |
| 6 | **ໜ່ວຍບໍລິການ ບ້ານໂພນໄຊສະຫວ່າງ** | **ຫຼວງນໍ້າທາ** | **ຍັງບໍ່ທັນໄດ້ປະຕິບັດ** | **ປ່ຽນເປັນໜ່ວຍດ່ານບໍ່ເຕັນ** |
| 7 | ໜ່ວຍບໍລິການເຊບັ້ງໄຟ | ຄໍາມ່ວນ | ປະຕິບັດແລ້ວ | 9/10/2018 |
| 8 | ໜ່ວຍບໍລິການດາກຈຶງ | ເຊກອງ | ປະຕິບັດແລ້ວ | 14/12/2018 |
| 9 | ໜ່ວຍບໍລິການດົງດໍາດວນ | ສະຫວັນນະເຂດ | ປະຕິບັດແລ້ວ | 22/10/2018 |
| C | **ໜ່ວຍບໍລິການທີ່ບໍ່ມີໃນແຜນປີ 2018** | | | |
| 1 | ໜ່ວຍບໍລິການຊີເອັສຊີ CSC | ສາຂາຈໍາປາສັກ | ປະຕິບັດນອກແຜນ | 25/07/2018 |

## 6. ການຂະຫຍາຍຜະລິດຕະພັນ ທຄຕລ

| ເນື້ອໃນ | ແຜນ 2018 | ປະຕິບັດ 2018 | ທຽບແຜນປີ |
|---|---|---|---|
| 1. ຜະລິດຕະພັນເງິນຝາກ (ຈຳນວນເປີດບັນຊີໃໝ່ )ລາຍການ | 180.236 | 209.471 | 116% |
| ເງິນຝາກກະແສລາຍວັນ | 4.799 | 3.858 | 80% |
| ເງິນຝາກປະຢັດ | 143.880 | 169.406 | 118% |
| ເງິນຝາກມີກຳນົດ | 30.780 | 35.992 | 117% |
| ເງິນຝາກອື່ນໆ | 777 | 215 | 28% |
| 2. ຈຳນວນບັນຊີໃໝ່ ຂອງລູກຄ້າສິນເຊື່ອ | 2.742 | 2.559 | 93% |
| 3. ຜະລິດຕະພັນບັດ | 105.870 | 143.457 | 136% |
| UnionPay | 84.014 | 107.480 | 128% |
| Student Card | 13.030 | 19.005 | 146% |
| VISA Credit Card | 646 | 764 | 118% |
| VISA debit Card | 3.791 | 5.074 | 134% |
| JCB Card | 166 | 98 | 59% |
| CO-Brand Card | 116 | 93 | 80% |
| Paycard Card | 3.676 | 10.446 | 284% |
| Smart tax Card | 431 | 497 | 115% |

| ເນື້ອໃນ | ແຜນ 2018 | ປະຕິບັດ 2018 | ທຽບແຜນປີ |
|---|---|---|---|
| 4. ບໍລິການອີເລັກໂທຣນິກ | 67.092 | 105.203 | 157% |
| BCEL One | 52.600 | 85.880 | 163% |
| BCEL Onepay | 4.000 | 6.304 | 158% |
| I-Bank | 2.167 | 3.154 | 146% |
| SMS Banking | 8.325 | 9.865 | 118% |
| **EDC** | **256** | **414** | **162%** |
| **ATM** | **56** | **23** | **41%** |
| **CDM** | **17** | **15** | **88%** |
| ຂະຫຍາຍໜ່ວຍບໍລິການ | **9** | **9** | **100%** |
| ຂະຫຍາຍ **BCOME** | **119** | **190** | **160%** |

# ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ເອກະສານລາຍງານການເງິນສະເພາະກິດຈະການສຳລັບຈຸດປະສົງພິເສດ

ວັນທີ 31 ທັນວາ 2018

# ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

## ໃບລາຍງານຜົນການດຳເນີນງານສະເພາະກິດຈະການ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2018

| | *ບົດອະທິບາຍ ເລກທີ* | *2018 ລ້ານກີບ* | *2017 ລ້ານກີບ* |
|---|---|---|---|
| ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ | 7 | 1.931.564 | 1.738.202 |
| ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນ | 7 | (1.000.577) | (887.891) |
| **ລາຍຮັບສຸດທິຈາກດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ** | **7** | **930.987** | **850.311** |
| ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ | 8 | 258.681 | 198.826 |
| ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ | 8 | (22.0 17) | (20.443) |
| **ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ** | **8** | **236.664** | **178.383** |
| ກຳໄລສຸດທິຈາກການແລກປ່ຽນເງິນຕາຕ່າງປະເທດ | 9 | 49.719 | 43.841 |
| ລາຍຮັບອື່ນໆຈາກການດຳເນີນງານ | 10 | 47.107 | 49.707 |
| **ລາຍຮັບທັງໝົດຈາກການດຳເນີນງານ** | | **1.264.477** | **1.122.242** |
| ລາຍຈ່າຍໜີ້ເສຍຈາກເງິນກູ້ໃຫ້ລູກຄ້າ | 17 | (221.957) | (212.409) |
| ເກັບຄືນຈາກ/(ຫັກເພີ່ມ) ຄ່າເສື່ອມມູນຄ່າການລົງທຶນທາງດ້ານການເງິນ | 11 | (27.246) | 9.257 |
| **ລາຍຮັບສຸດທິຈາກການດຳເນີນງານ** | | **1.015.274** | **919.090** |
| ລາຍຈ່າຍພະນັກງານ | 12 | (331.775) | (337.485) |
| ຄ່າຫລຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ | 21, 22 | (71.991) | (73.513) |
| ລາຍຈ່າຍອື່ນໆຈາກການດຳເນີນງານ | 13 | (152.252) | (134.906) |
| **ລາຍຈ່າຍທັງໝົດຈາກການດຳເນີນງານ** | | **(556.018)** | **(545.904)** |
| **ກຳໄລກ່ອນອາກອນ** | | **459.256** | **373.186** |
| ລາຍຈ່າຍອາກອນກຳໄລພາຍໃນໄລຍະ | 27.1 | (124.020) | (84.491) |
| ລາຍຈ່າຍອາກອນກຳໄລເຍື້ອນຊຳລະ | 27.1 | 18.420 | 1.715 |
| **ກຳໄລສຸດທິພາຍໃນໄລຍະ** | | **353.656** | **290.410** |
| **ກຳໄລຕໍ່ຮຸ້ນ (ກີບ)** | **35** | **1.703** | **1.865** |

| ກະກຽມໂດຍ: | ອະນຸມັດໂດຍ: | ອະນຸມັດໂດຍ: |
|---|---|---|
| ທ່ານ ນ. ມະໄລວັນ ສູນດາລາ | ທ່ານ ກິງສັກ ສຸພອນສີ | ທ່ານ ລືໃຈ ຄັນພຣະວົງສ໌ |
| ຮອງຫົວໜ້າພະແນກບັນຊີສັງລວມ | ຫົວໜ້າພະແນກກວດກາພາຍໃນ | ຮອງຜູ້ອຳນວຍການໃຫຍ່ |

ນະຄອນຫລວງວຽງຈັນ, ສປປ ລາວ
10 ເມສາ 2019

# ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານຜົນການດຳເນີນງານນອກການທຸລະກິດສະເພາະກິດຈະການ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2018

| | *ບົດອະທິບາຍ ເລກທີ* | *2018 ລ້ານກີບ* | *2017 ລ້ານກີບ* |
|---|---|---|---|
| **ກຳໄລສຸດທິພາຍໃນໄລຍະ** | | **353.656** | **290.410** |
| **ລາຍຮັບອື່ນໆນອກການທຸລະກິດ** | | | |
| ການປ່ຽນແປງມູນຄ່າຍຸດຕິທຳຂອງເຄື່ອງມືທາງການເງິນຫຼັກຊັບມີໄວ້ເພື່ອຂາຍ | | - | (7.669) |
| ການປ່ຽນແປງໃນເງິນແຮຄ່າເສື່ອມຂອງເຄື່ອງມືທາງການເງິນມີໄວ້ເພື່ອຂາຍ | | (2.875) | - |
| ການວັດແທກຄືນຂາດທຶນຈາກແຜນງານກຳນົດຜົນປະໂຫຍດຂອງພະນັກງານ | 28 | (1.411) | - |
| ອາກອນກຳໄລທີ່ເກີດຂຶ້ນຈາກອົງປະກອບລາຍຮັບນອກການທຸລະກິດ | | 1.028 | 1.841 |
| **ລາຍຮັບນອກການທຸລະກິດພາຍໃນໄລຍະ ຫຼັງຫັກອາກອນ** | | **(3.258)** | **(5.828)** |
| **ຍອດລວມລາຍຮັບນອກການທຸລະກິດພາຍໃນໄລຍະ ຫຼັງຫັກອາກອນ** | | **350.398** | **284.582** |

| ກະກຽມໂດຍ: | ອະນຸມັດໂດຍ: | ອະນຸມັດໂດຍ: |
|---|---|---|
| ທ່ານ ນ. ມະໄລວັນ ສຸນດາລາ | ທ່ານ ກົງສັກ ສຸພອນສີ | ທ່ານ ລີໃຈ ຄັນພຣະວົງສ໌ |
| ຮອງຫົວໜ້າພະແນກບັນຊີສັງລວມ | ຫົວໜ້າພະແນກາວດກາພາຍໃນ | ຮອງຜູ້ອຳນວຍການໃຫຍ່ |

ນະຄອນຫລວງວຽງຈັນ, ສປປ ລາວ

10 ເມສາ 2019

# ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານຖານະການເງິນສະເພາະກິດຈະການ
ນະວັນທີ 31 ທັນວາ 2018

| | ບົດອະທິບາຍ ເລກທີ | 31 ທັນວາ 2018 ລ້ານກີບ | 31 ທັນວາ 2017 ລ້ານກີບ |
|---|---|---|---|
| **ຊັບສິນ** | | | |
| ເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ | 14 | 5.334.240 | 5.812.734 |
| ເງິນຝາກຢູ່ທະນາຄານອື່ນ | 15 | 3.733.419 | 3.142.501 |
| ເງິນກູ້ໃຫ້ແກ່ລູກຄ້າ | 16 | 24.366.860 | 22.425.778 |
| ການລົງທຶນທາງການເງິນ - ປະເພດມີໄວ້ເພື່ອຂາຍ | 18 | 151.483 | 184.843 |
| ການລົງທຶນທາງການເງິນ - ປະເພດຖືໄວ້ຈົນເຖິງວັນຄົບກຳນົດ | 19 | 3.652.772 | 2.574.671 |
| ການລົງທຶນໃນບັນດາບໍລິສັດໃນເຄືອ ແລະ ບໍລິສັດຮ່ວມທຶນ | 20 | 514.007 | 561.623 |
| ຊັບສົມບັດຄົງທີ່ ແລະ ອຸປະກອນ | 21 | 449.238 | 456.237 |
| ຊັບສົມບັດຄົງທີ່ບໍ່ມີຕົວຕົນ | 22 | 246.596 | 247.582 |
| ຊັບສິນອາກອນເຍື້ອນຊໍາລະ | 27.4 | 29.099 | 17.955 |
| ຊັບສິນອື່ນໆ | 23 | 464.931 | 377.643 |
| **ລວມຊັບສິນ** | | **38.942.645** | **35.801.567** |
| **ໜີ້ສິນ** | | | |
| ໜີ້ຕ້ອງສົ່ງທະນາຄານ ແລະ ສະຖາບັນການເງິນອື່ນ | 24 | 3.413.129 | 3.275.546 |
| ໜີ້ຕ້ອງສົ່ງລູກຄ້າ | 25 | 29.915.142 | 28.403.957 |
| ກູ້ຢືມຈາກທະນາຄານອື່ນ | 26 | 3.349.266 | 2.145.402 |
| ໜີ້ສິນອາກອນພາຍໃນປີ | 27.2 | 35.793 | 20.656 |
| ໜີ້ສິນອາກອນເຍື້ອນຊໍາລະ | 27.4 | 5.272 | 13.576 |
| ໜີ້ສິນອື່ນໆ | 28 | 239.533 | 210.418 |
| **ລວມໜີ້ສິນ** | | **36.958.135** | **34.069.555** |
| **ທຶນ** | | | |
| ທຶນຈົດທະບຽນ | 29 | 1.038.617 | 1.038.617 |
| ຄັງສະສົມຕາມລະບຽບການ ແລະ ຄັງສະສົມອື່ນໆ | 30 | 439.550 | 380.382 |
| ເງິນແຮສໍາລັບຫຼັກຊັບມີໄວ້ເພື່ອຂາຍ | 31 | - | 2.186 |
| ກໍາໄລສະສົມ | | 506.343 | 310.827 |
| **ລວມທຶນ** | | **1.984.510** | **1.732.012** |
| **ລວມໜີ້ສິນ ແລະ ທຶນ** | | **38.942.645** | **35.801.567** |

| ກະກຽມໂດຍ: | ອະນຸມັດໂດຍ: | ອະນຸມັດໂດຍ: |
|---|---|---|
| ທ່ານ ນ. ມະໄລວັນ ສຸນດາລາ | ທ່ານ ກົງສັກ ສຸພອນສີ | ທ່ານ ລໍາໃຈ ຄົນພຣະວົງສ໌ |
| ຮອງຫົວໜ້າພະແນກບັນຊີສັງລວມ | ຫົວໜ້າພະແນກກວດກາພາຍໃນ | ຮອງຜູ້ອໍານວຍການໃຫຍ່ |

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

ນະຄອນຫລວງວຽງຈັນ, ສປປ ລາວ
10 ເມສາ 2019

# ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງສະເພາະກິດຈະການ
ສໍາລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2018

| | *ທຶນຈົດທະບຽນ ລ້ານກີບ* | *ຄັງສະສົມ ຕາມລະບຽບການ ລ້ານກີບ* | *ເງິນແຮສໍາລັບຫລັກຊັບມີໄວ້ເພື່ອຂາຍ ລ້ານກີບ* | *ກໍາໄລສະສົມ ລ້ານກີບ* | *ລວມ ລ້ານກີບ* |
|---|---|---|---|---|---|
| **ຍອດເຫຼືອໃນວັນທີ 31 ທັນວາ 2017** | **1.038.617** | **380.382** | **2.186** | **310.827** | **1.732.012** |
| ເງິນປັນຜົນ ທີ່ໄດ້ຈ່າຍໃຫ້ຜູ້ຖືຮຸ້ນ ສໍາລັບປີ 2017 | - | - | - | (97.900) | (97.900) |
| ແບ່ງເຂົ້າຄັງສະສົມພາຍໃນປີ 2017 | - | 59.168 | - | (59.168) | - |
| ກໍາໄລສຸດທິສໍາລັບປີ 2018 | - | - | - | 353.656 | 353.656 |
| ລາຍຮັບນອກການທຸລະກິດອື່ນພາຍໃນປີ 2018 | - | - | (2.186) | (1.072) | (3.258) |
| ໃນນີ້ | | | | | |
| *ການວັດແທກຄືນຂາດທຶນຈາກແຜນງານກໍານົດຜົນປະໂຫຍດພະນັກງານ* | - | - | - | *(1.411)* | *(1.411)* |
| *ສ່ວນປ່ຽນແປງໃນເງິນແຮຂອງຊັບສິນທາງການເງິນຫຼັກຊັບມີໄວ້ເພື່ອຂາຍ* | - | - | *(2.875)* | - | *(2.875)* |
| *ອາກອນກໍາໄລທີ່ຕິດພັນກັບອົງປະກອບຂອງລາຍຮັບນອກການທຸລະກິດອື່ນ* | - | - | *689* | *339* | *1.028* |
| **ຍອດເຫຼືອນະວັນທີ 31 ທັນວາ 2018** | **1.038.617** | **439.550** | **-** | **506.343** | **1.984.510** |

# ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງສະເພາະກິດຈະການ (ຕໍ່)
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2018

| | *ທຶນຈົດທະບຽນ ລ້ານກີບ* | *ຄັງສະສົມ ຕາມລະບຽບການ ລ້ານກີບ* | *ເງິນແຮສຳລັບຫລັກ ຊັບມີໄວ້ເພື່ອຂາຍ ລ້ານກີບ* | *ກຳໄລສະສົມ ລ້ານກີບ* | *ຄັງສຳຮອງເພີ່ມທຶນ ລ້ານກີບ* | *ລວມ ລ້ານກີບ* |
|---|---|---|---|---|---|---|
| **ຍອດເຫຼືອໃນວັນທີ 31 ທັນວາ 2016** | **682.888** | **345.437** | **8.014** | **170.953** | **12.275** | **1.219.567** |
| ແບ່ງສ່ວນສຳລັບເງິນປັນຜົນ ທີ່ໄດ້ຈ່າຍໃຫ້ຜູ້ຖືຮຸ້ນ ສຳລັບປີ 2016 | - | - | - | (83.858) | - | (83.858) |
| ແບ່ງເຂົ້າຄັງສະສົມພາຍໃນປີ 2016 | - | 34.910 | - | (34.910) | - | - |
| ຈ່າຍເງິນປັນຜົນລ່ວງໜ້າໃຫ້ແກ່ ກະຊວງການເງິນ ປີ 2017 | - | - | - | (50.000) | - | (50.000) |
| ການເພີ່ມທຶນ | 355.729 | - | - | - | - | 355.729 |
| ເກັບຄືນຄັງສຳຮອງເພີ່ມເຕີມທຶນ | - | - | - | 12.275 | (12.275) | - |
| ອື່ນໆ | - | 35 | - | - | - | 35 |
| ເກັບຄືນໜີ້ຕ້ອງສົ່ງອາກອນປີຜ່ານມາ ຕາມຜົນການໄລ່ລຽງຂອງສ່ວຍສາອາກອນ | - | - | - | 5.957 | - | 5.957 |
| ກຳໄລສຸດທິສຳລັບປີ 2017 | - | - | - | 290.410 | - | 290.410 |
| ລາຍຮັບນອກການທຸລະກິດອື່ນພາຍໃນປີ 2017 | - | - | (5.828) | - | - | (5.828) |
| ໃນນີ້ລວມມີ: | | | | | | |
| *ສ່ວນປ່ຽນແປງໃນມູນຄ່າຍຸດຕິທຳຂອງຊັບສິນທາງການເງິນ ຫຼັກຊັບມີໄວ້ເພື່ອຂາຍ* | - | - | *(7.669)* | - | - | *(7.669)* |
| *ອາກອນກຳໄລທີ່ເກີດພົວພັນກັບອົງປະກອບຂອງລາຍຮັບນອກການທຸລະກິດອື່ນ* | - | - | *1.841* | - | - | *1.841* |
| **ຍອດເຫຼືອນະວັນທີ 31 ທັນວາ 2017** | **1.038.617** | **380.382** | **2.186** | **310.827** | **-** | **1.732.012** |

ກະກຽມໂດຍ:

ທ່ານ ນ. ມະໄລວັນ ສຸນດາລາ
ຮອງຫົວໜ້າພະແນກບັນຊີສັງລວມ

ອະນຸມັດໂດຍ:

ທ່ານ ກິງສັກ ສຸພອນສີ
ຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທ່ານ ສາໃຈ ຄັນພຣະວົງສ໌
ຮອງຜູ້ອຳນວຍການໃຫຍ່

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC ນະຄອນຫລວງ

ນະຄອນຫລວງວຽງຈັນ, ສປປ ລາວ
10 ເມສາ 2019

# ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານກະແສເງິນສົດສະເພາະກິດຈະການ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2018

| | *ບົດອະທິບາຍ ເລກທີ* | *2018 ລ້ານກີບ* | *2017 ລ້ານກີບ* |
|---|---|---|---|
| **ກິດຈະກຳການດຳເນີນງານ** | | | |
| **ກຳໄລກ່ອນອາກອນ** | | **459.256** | **373.186** |
| *ການດັດແກ້ສຳລັບ:* | | | |
| ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ | 21, 22 | 71.991 | 73.513 |
| ລາຍຈ່າຍຄ່າເສື່ອມ | 11, 17 | 249.203 | 203.152 |
| ລາຍຈ່າຍສຳລັບຫັກລ້າງຊັບສິນບັດພວມກໍ່ສ້າງ | 13 | - | 18.640 |
| ລາຍຈ່າຍສຳລັບພະນັກງານຫຼັງອອກການ | 12 | 24.134 | 67.655 |
| ລາຍຮັບດອກເບ້ຍ | 7 | (1.931.564) | (1.738.202) |
| ລາຍຈ່າຍດອກເບ້ຍ | 7 | 1.000.577 | 887.891 |
| ລາຍຮັບເງິນປັນຜົນ | 10 | (32.638) | (40.039) |
| **ກະແສເງິນສົດຈາກ ກຳໄລຈາກການດຳເນີນງານກ່ອນການປ່ຽນແປງດ້ານຊັບສິນ ແລະ ໜີ້ສິນ** | | **(159.041)** | **(154.204)** |
| *ສ່ວນປ່ຽນແປງໃນຊັບສິນຈາກການດຳເນີນງານ* | | | |
| ປ່ຽນແປງສຸດທິໃນຍອດເຫຼືອຢູ່ທະນາຄານອື່ນ | | (1.498.113) | (222.082) |
| ປ່ຽນແປງສຸດທິໃນເງິນກູ້ໃຫ້ແກ່ລູກຄ້າ | | (1.982.178) | (3.421.495) |
| ລົງທຶນທາງການເງິນ - ປະເພດຖືໄວ້ຈົນຄົບກຳນົດ | | 280.969 | 5.840 |
| ລົງທຶນທາງການເງິນ - ປະເພດມີໄວ້ເພື່ອຂາຍ | | 762 | (762) |
| ປ່ຽນແປງສຸດທິໃນຊັບສິນອື່ນໆ | | (26.885) | (66.350) |
| *ສ່ວນປ່ຽນແປງໃນໜີ້ສິນຈາກການດຳເນີນງານ* | | | |
| ປ່ຽນແປງສຸດທິໃນໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ | | 1.299.350 | 253.290 |
| ປ່ຽນແປງສຸດທິໃນໜີ້ຕ້ອງສົ່ງລູກຄ້າ | | 1.448.852 | 2.935.339 |
| ປ່ຽນແປງສຸດທິໃນໜີ້ສິນອື່ນໆ | | 33.851 | 31.169 |
| ດອກເບ້ຍທີ່ໄດ້ຮັບ | | 1.681.209 | 1.597.175 |
| ດອກເບ້ຍທີ່ໄດ້ຈ່າຍ | | (904.321) | (842.356) |
| ອາກອນທີ່ໄດ້ຈ່າຍພາຍໃນປີ | 27.3 | (102.247) | (93.299) |
| **ກະແສເງິນສົດສຸດທິ/(ນຳໃຊ້)ຈາກ ການດຳເນີນງານ** | | **72.208** | **22.265** |
| **ການເຄື່ອນໄຫວດ້ານການລົງທຶນ** | | | |
| ການຈັດຊື້ ແລະ ການກໍ່ສ້າງຊັບສິນບັດຄົງທີ່ | | (120.335) | (89.011) |
| ຮັບຈາກການຂາຍຊັບສິນບັດຄົງທີ່ | | - | 772 |
| ຮັບເງິນປັນຜົນ | | 32.638 | 40.039 |
| **ກະແສເງິນສົດສຸດທິທີ່ໄດ້ນຳໃຊ້ເຂົ້າໃນການເຄື່ອນໄຫວການລົງທຶນ** | | **(87.697)** | **(48.200)** |
| **ກິດຈະກຳການດຳເນີນງານການເຄື່ອນໄຫວທາງການເງິນ** | | | |
| ຈ່າຍເງິນປັນຜົນ | | (97.900) | (133.858) |
| ການເພີ່ມທຶນ | | - | 360.060 |
| ຄ່າໃຊ້ຈ່າຍໃນການອອກຮຸ້ນ | | - | (4.296) |
| **ກະແສເງິນສົດສຸດທິຈາກ/ (ທີ່ນຳໃຊ້ໃນ) ການເຄື່ອນໄຫວທາງການເງິນ** | | **(97.900)** | **221 .90 6** |
| **ຫຼຸດລົງສຸດທິ ຂອງເງິນສົດ ແລະ ທຽບເທົ່າເງິນສົດ** | | **(113.389)** | **195.971** |
| **ເງິນສົດ ແລະ ທຽບເທົ່າເງິນສົດໃນຕົ້ນປີ** | | **7.315.158** | **7.119.187** |
| **ເງິນສົດ ແລະ ທຽບເທົ່າເງິນສົດໃນທ້າຍປີ** | **32** | **7.201.769** | **7.315.158** |

## ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານກະແສເງິນສົດສະເພາະກິດຈະການ (ຕໍ່)
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2018

| ກະກຽມໂດຍ: | ອະນຸມັດໂດຍ: | ອະນຸມັດໂດຍ: |
|---|---|---|
| ທ່ານ ນ. ມະໄລວັນ ສຸນດາລາ | ທ່ານ ກົງສັກ ສຸພອນສີ | ທ່ານ ລາໃຈ ຄັນພຣະວົງສ໌ |
| ຮອງຫົວໜ້າພະແນກບັນຊີສັງລວມ | ຫົວໜ້າພະແນກກວດກາພາຍໃນ | ຮອງຜູ້ອຳນວຍການໃຫຍ່ |

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ນະຄອນຫຼວງວຽງຈັນ, ສປປ ລາວ.

10 ເມສາ 2019

# ແຜນການປີ 2019

**(ເອກະສານປະກອບວາລະ 5)**

## I. ສະພາບທົ່ວໄປ:

ໃນປີຜ່ານມາ, ເຫັນໄດ້ເຫດການຂໍ້ຂັດແຍ້ງທາງດ້ານການເມືອງໄດ້ຂະຫຍາຍກ້ວາງອອກສູ່ຫຼາຍພູມີພາກ ແລະ ກ້າວໄປສູ່ການສະກັດກັ້ນດ້ານການຄ້າ-ການລົງທຶນ ລະຫວ່າງກັນ. ຂໍ້ຂັດແຍ້ງທາງການຄ້າຂອງຫຼາຍຝ່າຍ ເລີ່ມທະວີຄູນ ຂຶ້ນສູງໂດຍສະເພາະແມ່ນການສ້າງກໍາແພງພາສີການຄ້າລະຫວ່າງກັນ. ທັງໝົດນັ້ນ, ໄດ້ເປັນສາເຫດພາໃຫ້ຫຼາຍປະເທດຕ້ອງ ໄດ້ກໍານົດຍຸດທະສາດຮອງຮັບໄລຍະສັ້ນ ແລະ ໄລຍະຍາວ ເປັນຕົ້ນແມ່ນການປັບປຸງການຖືຄອງເງິນຕາ, ການຊອກຫາ ຄູ່ຮ່ວມຍຸດທະສາດການຄ້າໃໝ່, ການປັບປຸງອັດຕາດອກເບ້ຍພາຍໃນ, ການຫຼຸດຜ່ອນກໍາລັງການຜະລິດລົງ, ການປັບປຸງ ດ້ານອຸປະກອນເຕັກນິກ.

ເຖິງແນວໃດກໍ່ດີ, ຄຽງຄູ່ກັບການຂະຫຍາຍຕົວຂອງການລົງທຶນ ການຂະຫຍາຍຕົວຂອງຜະລິດຕະພັນແຫ່ງຊາດ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຈະສືບຕໍ່ພັດທະນາຕົນເອງຮອບດ້ານ, ເພີ່ມທະວີການຂະຫຍາຍຜະລິດຕະພັນໃຫ້ຫຼາຍຂຶ້ນ, ເພີ່ມທະວີການສ້າງລາຍຮັບ ຄຸ້ມຄອງລາຍຈ່າຍ ແນໃສ່ສ້າງຜົນປະໂຫຍດສູງສຸດແກ່ຜູ້ຖືຮຸ້ນ ຊຶ່ງລາຍລະອຽດ ມີຄືດັ່ງນີ້ :

## II. ຍຸດທະສາດພັດທະນາ ແລະ ແຜນການດໍາເນີນງານ ທຄຕລ ປີ 2019:

### 1. ວິໄສທັດ ທຄຕລ

ໄດ້ກໍານົດວິໄສທັດລວມຂອງຕົນຕາມແຜນຍຸດທະສາດໄລຍະຍາວ ແຕ່ປີ 2016-2020 ຄື: *"**ເປັນທະນາຄານທີ່ເຂັ້ມ ແຂງ ທັນສະໄໝ ກ້າວສູ່ມາດຕະຖານສາກົນ**"*.

### 2. ພາລະກິດ

ທຄຕລ ຍັງສືບຕໍ່ຈັດຕັ້ງປະຕິບັດແຜນປັບປຸງພາລະກິດ ສໍາຄັນໆ ຂອງ ທຄຕລ 2016-2020 ***ຄື : "ພັດທະນາລະບົບບໍລິຫານອົງກອນທີ່ເຂັ້ມແຂງເນັ້ນການປັບປຸງທຸລະກິດທະນາຄານໃຫ້ແທດເໝາະກັບສະພາບການປ່ຽນແປງໃນໄລຍະໃໝ່ ຖືເອົາການສ້າງວັດທະນະທໍາຄຸ້ມຄອງບໍລິຫານຄວາມສ່ຽງໃຫ້ເຂັ້ມແຂງ ແລະສອດຄ່ອງຕາມຫຼັກການ Basel II, ຍົກສູງປະສິດທິພາບການດໍາເນີນທຸລະກິດ, ສ້າງ ແລະ ພັດທະນາລະບົບຂໍ້ມູນຂ່າວສານບໍລິຫານທີ່ມີສັກກາຍະພາບ, ຄົບຖ້ວນ, ຖືກຕ້ອງ ແລະ ທັນເວລາ, ໄດ້ມາດຕະຖານສາກົນ ທາງດ້ານລະບົບລາຍງານ, ນໍາໃຊ້ລະບົບເທັກໂນໂລຊີທີ່ທັນ ສະໄໝ ແລະ ຍົກລະດັບຄວາມຮູ້, ຄວາມຊ່ຽວຊານສະເພາະດ້ານໃຫ້ເທົ່າທຽມກັບພາກພື້ນ ແລະ ສາກົນ"***.

### 3. ເປົ້າໝາຍການດໍາເນີນງານ 2019

ໃນການສືບຕໍ່ຈັດຕັ້ງຜັນຂະຫຍາຍພາລະກິດໄລຍະຍາວ ທຄຕລ ເພື່ອຮອງຮັບໃນການປັບປຸງບໍລິການ ພັດທະນາລະບົບການຄຸ້ມຄອງບໍລິຫານ 2019 ບັນດາວຽກງານຕົ້ນຕໍແມ່ນຍັງສືບຕໍ່ແຜນງານ 6 ແຜນງານຫລັກ (ຮັກສາເດີມ); 32 ໂຄງການໃຫຍ່ 273 ແຜນວຽກ. ປີນີ້ໄດ້ຮັບເອົາແຜນວຽກຍ່ອຍຂອງແຕ່ລະພາກສ່ວນເຂົ້າມາເພີ່ມຈໍານວນ 143 ແຜນວຽກຍ່ອຍ.

**ບັນດາໂຄງການຂອງແຕ່ລະແຜນງານມີຄື :**

1. ພັດທະນາການຄຸ້ມຄອງບໍລິຫານໃຫ້ໄດ້ມາດຕະຖານສາກົນ: 3 ໂຄງການ ແລະ ມີ 4 ແຜນວຽກ.
2. ສ້າງລະບົບຄຸ້ມຄອງຄວາມສ່ຽງ ແລະ ປະຕິບັດຫຼັກເກນ ບາເຊວ II ລວມມີ: 4 ໂຄງການ ແລະ ມີ 22 ແຜນວຽກ.
3. ສ້າງລະບົບຂໍ້ມູນເພື່ອການບໍລິຫານ: 6 ໂຄງການ ມີ 40 ແຜນວຽກ.
4. ການພັດທະນາ ແລະ ຄຸ້ມຄອງລະບົບໄອທີ ມີ: 5 ໂຄງການ ແລະ ມີ 47 ແຜນວຽກ.
5. ການບໍລິຫານ ແລະ ພັດທະນາ ບຸກຄະລາກອນ ລວມມີ: 4 ໂຄງການ ແລະ ມີ 57 ແຜນວຽກ.
6. ພັດທະນາການບໍລິຫານການເງິນ, ການບໍລິການທີ່ທັນສະໄໝ ແລະ ປະສິດທິພາບການດໍາເນີນທຸລະກິດໃຫ້ສູງຂຶ້ນ : ມີ 10 ໂຄງການ ແລະ ມີ 103 ແຜນວຽກ.

ນອກຈາກໂຄງການຫຼັກນີ້ແລ້ວ, ຍັງຈະມີໂຄງການສະໜັບສະໜູນຕື່ມອີກຫລາຍໂຄງການຍ່ອຍເພີ່ມຕື່ມເຊັ່ນ: ລາຍງານກ່ຽວກັບວຽກງານ CG ເພື່ອສະເໜີຂໍທິດປັບປຸງການບໍລິຫານຕາມຫຼັກການ CG, ສືບຕໍ່ດໍາເນີນການຄົ້ນຄວ້າຄວາມເປັນ

ໄປ ໄດ້ໃນການສ້າງຫ້ອງການຕົວແທນ ທຄຕລ ໃນຕ່າງປະເທດ, ດຳເນີນການຂາຍຮຸ້ນ 19% ຂອງ ທຄຕລ ທີ່ກະຊວງການເງິນຖືຄອງ, ໂຄງການ ສືບຕໍ່ LOS, ບັນດາໂຄງການຍ່ອຍຂອງ Basel II, ໂຄງການທີ່ຕິດພັນບັນຊີແມ່ນ ການກະກຽມຄວາມພ້ອມໃນການ ຈັດຕັ້ງປະຕິບັດ IFRS 9, ໂຄງການຂອງການພັດທະນາຜະລິດຕະພັນ, ໂຄງການປຸກສ້າງ ແລະ ອື່ນໆ. ຊຶ່ງການເພີ່ມຂຶ້ນ ຫຼື ຫຼຸດລົງຂອງບັນດາໂຄງການ ແມ່ນ ສົມທຽບໃສ່ບັນດາແຜນຈັດຕັ້ງປະຕິບັດໂຄງການຂອງປີຜ່ານມາ.

ໃນການປັບປຸງ ພັດທະນາ ເພື່ອຍົກສູງປະສິດທິພາບ ແຕ່ລະດ້ານ ເພີ່ມທະວີການຄຸ້ມຄອງບໍລິຫານ ທີ່ຮັດກຸມ, ຍົກສູງການສ້າງລາຍຮັບ 2019 ແມ່ນປະກອບມີ 6 ແຜນງານຫຼັກ; 32 ໂຄງການໃຫຍ່ ແລະ 273 ແຜນວຽກ. ບັນດາ ໜ້າວຽກດັ່ງກ່າວ ໄດ້ກະຈາຍຢູ່ໃນບັນດາ ຄະນະກຳມະການ, ພະແນກ, ສູນ, ສາຂາ, ຂະແໜງງານ ແລະ ໜ່ວຍບໍລິການ.

## III. ແຜນຕົວເລກທຸລະກິດສຳຄັນ ປະຈຳປີ 2019

ໃນປີ 2019 ແມ່ນປີທ້າທາຍອີກປີໜຶ່ງສຳລັບການສ້າງລາຍຮັບໃນທ່າມກາງສະພາບແວດລ້ອມເສດຖະກິດບໍ່ເອື້ອອຳນວຍເທົ່າທີ່ຄວນລວມທັງສະພາບການແຂ່ງຂັນທີ່ສູງ, ໂດຍສະເພາະແມ່ນແຜນຖານະການເງິນ ແລະ ໃບລາຍງານຜົນໄດ້ຮັບໄດ້ອີງໃສ່ຖານຂໍ້ມູນຕົວເລກຜົນການດຳເນີນທຸລະກິດຕາມບັນຊີ ທຄຕລ 2018 ເປັນປີຖານໃນການໄລ່ລຽງກຳນົດບັນດາຕົວເລກແຜນທຸລະກິດຕ່າງໆ. ນອກນັ້ນ, ຍັງໄດ້ອີງໃສ່ແຜນລະດັບການຂະຫຍາຍໂຕທາງທຸລະກິດຂອງແຜນໄລຍະຍາວຮອດປີ 2020 ທຄຕລ, ຂໍ້ມູນມະຫາພາກແວດລ້ອມທາງເສດຖະກິດຕ່າງໆທີ່ກ່ຽວຂ້ອງຊຶ່ງໄດ້ຮັບຮອງເອົາເປົ້າໝາຍສູ້ຊົນແຕ່ລະດ້ານຄືດັ່ງນີ້:

### 1. ແຜນທຸລະກິດປະຈຳປີ 2019 (ສົມທຽບໃສ່ຕົວເລກປະຕິບັດປີ 2018 ມາດຕະຖານລາວ).

- ຍອດຊັບສິນທັງໝົດ: 42.742.300 ລ້ານກີບ ທຽບປະຕິບັດ 2018 ເພີ່ມຂຶ້ນ 8,7%;
- ຍອດສິນເຊື່ອທັງໝົດ: 25.830.000 ລ້ານກີບ ທຽບປະຕິບັດ 2018 ເພີ່ມຂຶ້ນ 6,1%;
- ໜີ້ NPL ທັງໝົດ: 615.000 ລ້ານກີບ ທຽບປະຕິບັດ 2018 ຫຼຸດລົງ 16%;
- ເງິນຝາກທັງໝົດ: 35.730.000 ລ້ານກີບ ທຽບປະຕິບັດ 2018 ເພີ່ມຂຶ້ນ 8,3%;
- **ກຳໄລກ່ອນອາກອນ**: 565.000 ລ້ານກີບ ທຽບປະຕິບັດ 2018 ເພີ້ມຂຶ້ນ 5,4%.

### 2. ແຜນປະກອບວັດຖຸເຕັກນິກ, ກໍ່ສ້າງ ແລະ ສ້ອມແປງ

ໃນປີ 2019 ທຄຕລ ໄດ້ກຳນົດຍຸດທະສາດ ສືບຕໍ່ພາລະກິດພັດທະນາລະບົບບໍລິການ, ຂະຫຍາຍເຄືອຂ່າຍບໍລິການລົງສູ່ຂົງເຂດເສດຖະກິດ ແນໃສ່ຮັບໃຊ້ບໍລິການໃຫ້ທ່ວງທັນ ຕາມຄຳຂວັນ ***"ທັນສະໄໝ ວ່ອງໄວ ໝັ້ນໃຈ "*** ທົ່ວເຖິງໂດຍເນັ້ນໃສ່ພັດທະນາໃນລະບົບອີເລັກໂທຼນິກ, ຊຶ່ງມີຄວາມຈຳເປັນທີ່ສຸດຕ້ອງໄດ້ປະກອບບຸກຄະລາກອນເຂົ້າໃສ່ແຕ່ລະໜ້າວຽກ, ປະກອບສິ່ງຈັດວາງຕິດຕັ້ງໃຫ້ເປັນລະບົບຄົບຊຸດ, ມີສະຖານທີ່ພຽບພ້ອມ ແລະ ຄວາມຕ້ອງການໃນການບຳລຸງຮັກສາອຸປະ ກອນກໍຍັງມີສູງ. ແຕ່ອີງໃສ່ຂໍ້ຈຳກັດຂອງການນຳໃຊ້ຊັບສິນບັດທຽບກັບທຶນມີເອງ ທຄຕລ ຈຶ່ງໄດ້ກຳນົດຍຸດທະສາດທັນເປັນການເຊົ່າພາຍນອກແທນການປະກອບເອງເປັນສ່ວນຫຼາຍ. ແຜນປະກອບວັດຖຸເຕັກນິກ, ກໍ່ສ້າງ ແລະ ສ້ອມແປງລວມທັງໝົດ: **172.153** ລ້ານກີບ ຊຶ່ງໃນນັ້ນປະກອບມີລາຍລະອຽດຄືດັ່ງລຸ່ມນີ້ :

- **ການກໍ່ສ້າງພື້ນຖານ + ສ້ອມແປງນ້ອຍ ແລະໃຫຍ່: 58.731** ລ້ານກີບ ໃນນັ້ນ ມີແຜນຈັດຊື້ທີ່ດິນ 18.300 ລ້ານກີບ, ອອກແບບກໍ່ສ້າງອາຄານຕົບແຕ່ງ 19.136 ລ້ານກີບ, ຕໍ່ເຕີມອາຄານປະມານ 950 ລ້ານກີບ, ສ້ອມແປງຂອງສຳ ນັກງານສາຂາ ແລະ ໜ່ວຍບໍລິການທີ່ຈະຂະຫຍາຍໃໝ່ 12.900 ລ້ານກີບ ທີ່ຂຶ້ນກັບສຳນັກງານໃຫຍ່ ແລະ ສາຂາໃນທົ່ວລະບົບ, ສ້ອມແປງນ້ອຍ-ໃຫຍ່ 7.445 ລ້ານກີບ.
- **ແຜນພັດທະນາ Program ຕ່າງໆ: 12.817 ລ້ານກີບ** ລວມມີການພັດທະນາໂປແກຼມຂອງສູນບັດ, ສູນໄອທີ ແລະ ຄ່າບຳລຸງຮັກສາໂປແກຼມຕ່າງໆ ຂອງທົ່ວລະບົບ.
- **ການປະກອບພາຫານະຂົນສົ່ງ: 3.299 ລ້ານກີບ**: ເພື່ອທົດແທນລົດເກົ່າທີ່ໝົດຄ່າຫຼຸ້ຍຫ້ຽນ, ເປ່ເພ, ເປັນລົດເຄື່ອນຍ້າຍວັດຖຸ ແລະ ນຳໃຊ້ໃນວຽກງານຂອງສາຂາ, ໜ່ວຍບໍລິການໃນທົ່ວລະບົບທີ່ມີຄວາມຈຳເປັນ.

- **ເຄື່ອງເຢັນ ແລະ ສິ່ງຕິດຕັ້ງຕ່າງໆ: 3.499** ລ້ານກີບ.
- **ເຄື່ອງຈັກຮັບໃຊ້ຫ້ອງການ: 89.649** ລ້ານກີບ ລວມມີອຸປະກອນຮັບໃຊ້ວຽກງານສ້າງຄວາມສະດວກໃນການບໍລິການສຳນັກງານໃຫຍ່, ສາຂາ ແລະ ໜ່ວຍບໍລິການທີ່ຈະເປີດໃໝ່.
- **ເຄື່ອງເຟີນິເຈີຕ່າງໆ: 4.159** ລ້ານກີບ ປະກອບດ້ວຍໂຕະ, ຕັ່ງ, ຕູ້ເອກະສານ, ຕູ້ເຊັບ ແລະ ອື່ນໆ.

## 3. ແຜນຂະຫຍາຍຕາໜ່າງທຸລະກິດ

ໃນປີ 2019 ທຄຕລ ຈະເອົາໃຈໃສ່ຂະຫຍາຍໜ່ວຍບໍລິການ ໃນຂົງເຂດເສດຖະກິດມີການຂະຫຍາຍຕົວດີ, ຊຶ່ງແຜນສືບຕໍ່ຂະຫຍາຍໜ່ວຍບໍລິການທັງໝົດ 10 ໜ່ວຍບໍລິການ ໃນນັ້ນ, ຈະຂະຫຍາຍຢູ່ນະຄອນຫຼວງວຽງຈັນ ຈຳນວນ 05 ໜ່ວຍບໍລິການ ແລະ ແຜນຂະຫຍາຍໃໝ່ 05 ໜ່ວຍບໍລິການຢູ່ບັນດາແຂວງຕ່າງໆ ທີ່ເໝາະສົມ ດັ່ງລາຍລະອຽດລຸ່ມນີ້:

❖ **ໜ່ວຍບໍລິການຢູ່ນະຄອນຫຼວງວຽງຈັນ 05 ໜ່ວຍບໍລິການ:**

1. ໜ່ວຍບໍລິການເຂດເກົ້າລ້ຽວ ເມືອງສີໂຄດຕະບອງ
2. ໜ່ວຍບໍລິການເຂດບ້ານວັດໄຕ ເມືອງສີໂຄດຕະບອງ
3. ໜ່ວຍບໍລິການເຂດບ້ານໂພນຕ້ອງ ເມືອງຈັນທະບູລີ (ແຜນສືບຕໍ່ຂອງປີ 2018 )
4. ໜ່ວຍບໍລິການເຂດຫ້ວຍນ້ຳເຢັນ ເມືອງນາຊາຍທອງ
5. ໜ່ວຍບໍລິການ ເມືອງປາກງື່ມ

❖ **ໜ່ວຍບໍລິການທີ່ຂຶ້ນກັບສາຂາ 05 ໜ່ວຍບໍລິການ:**

| | |
|---|---|
| 6. ໜ່ວຍບໍລິການເມືອງເງິນ | ສາຂາໄຊຍະບູລີ |
| 7. ໜ່ວຍບໍລິການ ລະຄອນສີ ເມືອງລະຄອນເພັງ | ສາຂາສາລະວັນ |
| 8. ໜ່ວຍບໍລິການ ເຂດພິເສດບໍ່ເຕັນແດນງາມ | ສາຂາຫຼວງນ້ຳທາ (ແຜນສືບຕໍ່ຂອງປີ 2018 ) |
| 9. ໜ່ວຍບໍລິການເມືອງສະໜາມໄຊ | ສາຂາອັດຕະປື |
| 10. ໜ່ວຍບໍລິການເມືອງວຽງໄຊ | ສາຂາຫົວພັນ |

## 4. ແຜນບຸກຄະລາກອນ

ໃນປີ 2019 ທຄຕລ ໄດ້ມີແຜນພັດທະນາວຽກງານຫຼາຍໆດ້ານ ແລະ ແຜນຂະຫຍາຍຕາໜ່າງບໍລິການໃນຂອບເຂດທົ່ວປະເທດທີ່ເຫັນວ່າມີຄວາມເໝາະສົມ. ສະນັ້ນ, ຈຶ່ງໄດ້ຮັບຮອງເອົາແຜນເພີ່ມບຸກຄະລາກອນຈຳນວນ **200 ຄົນ** ໃນການເພີ່ມຈຳນວນພະນັກງານດັ່ງກ່າວ ແມ່ນຈະບັນຈຸໃສ່ບັນດາພະແນກ, ສູນ, ສາຂາ ແລະ ໜ່ວຍບໍລິການຂອງ ທຄຕລ ທົ່ວລະບົບ. ພ້ອມກັນນັ້ນ, ອີກຈຳນວນນຶ່ງກໍ່ເພື່ອປ່ຽນແທນພະນັກງານທີ່ຈະອອກຮັບບຳເນັດຕາມລະບຽບການ ແລະ ທົດແທນພະນັກງານທີ່ອອກສ້າງເສດຖະກິດຄອບຄົວ.

**ເອກະສານຄັດຕິດ 6**

## ບົດລາຍງານການຮ່ວມທຶນສ້າງຕັ້ງ
**ບໍລິສັດ ລາວເນເຊິນນໍ ເພເມັ້ນ ເນັດເວີກ ຈຳກັດ (Lao National Payment Network Co., LTD)**
**(ເອກະສານປະກອບວາລະ 7)**

### 1. ສະພາບການພັດທະນາຂະແໜງການເງິນ-ການທະນາຄານ

ມາຮອດໄຕມາດ 03 ຂອງປີ 2018, ທະນາຄານທຸລະກິດ ມີຈຳນວນ 43 ແຫ່ງ ໃນນັ້ນ, ມີ 108 ສາຂາ, 529 ໜ່ວຍບໍລິການ, 35 ໜ່ວຍແລກປ່ຽນເງິນຕາ ແລະ ຕູ້ ATM 1.208 ໜ່ວຍ. ທົ່ວລະບົບທະນາຄານທຸລະກິດ ມີຍອດຊັບສິນທັງໝົດ 132.470,27 ຕື້ກີບ, ເພີ່ມຂຶ້ນ 4,98%; ຍອດເງິນຝາກ 72.904,81 ຕື້ກີບ, ເພີ່ມຂຶ້ນ 3,97% (ບໍ່ລວມເງິນຝາກຂອງບຸກຄົນທີ່ບໍ່ຕັ້ງຖິ່ນຖານຢູ່ລາວ). ໃນທ້າຍປີ 2017, ສປປ ລາວ ໄດ້ມີກົດໝາຍວ່າດ້ວຍລະບົບຊໍາລະ ເພື່ອຮອງຮັບການຊໍາລະສະສາງທີ່ທັນສະໄໝ ແລະ ນັບມື້ນັບຂະຫຍາຍຕົວຂຶ້ນເລື້ອຍໆ.

### 2. ປະຫວັດຄວາມເປັນມາຂອງບໍລິສັດ LAPNet

ບໍລິສັດ Lao National Payment Network Co., LTD (LAPNet) ແມ່ນເປັນບໍລິສັດນິຕິບຸກຄົນ ໄດ້ຮັບການສ້າງຕັ້ງຂຶ້ນໃນປີ 2019 ໂດຍການແຍກຕົວອອກຈາກ ໂຄງການ LAPs (Lao ATM Pool Switching) ເຊິ່ງເລີ່ມເປີດນຳໃຊ້ຢ່າງເປັນທາງການ ວັນທີ 24 ພະຈິກ 2015 ເຊິ່ງໂຄງການດັ່ງກ່າວແມ່ນທຶນຊ່ວຍເຫຼືອຂອງລັດຖະບານ ສປ ຈີນ ໂດຍແມ່ນທະນາຄານແຫ່ງ ສປປ ລາວ (BOL) ແລະ ທະນາຄານພັດທະນາແຫ່ງຊາດຈີນ (CDB) ເປັນຜູ້ຮັບຜິດຊອບໂຄງການ; ບໍລິສັດຢູນຽນເພ (CUP) ເປັນຜູ້ພັດທະນາໂຄງການ. ຈຸດປະສົງຕົ້ນຕໍຂອງບໍລິສັດ LAPNet ເພື່ອຫັນໄປສູ່ທັນສະໄໝໃນການຮອງຮັບການຊໍາລະສະສາງທຸລະກຳຍ່ອຍ ລະຫວ່າງ ບັນດາທະນາຄານທີ່ເຂົ້າຮ່ວມປະກອບທຶນເຂົ້າໃນບໍລິສັດ, ທະນາຄານທີ່ເຂົ້າຮ່ວມປະກອບທຶນ ກໍ່ຈະສາມາດຫຼຸດຕົ້ນທຶນການດຳເນີນງານໃນການຕິດຕັ້ງຕູ້ ATM, ເຄື່ອງ POS ແລະ ບັນຫາສຳຄັນກໍ່ແມ່ນບັນດາພໍ່ແມ່ປະຊາຊົນທີ່ເປັນລູກຄ້ານຳໃຊ້ຜະລິດຕະພັນບັດຂອງທະນາຄານທີ່ເຂົ້າຮ່ວມ ກໍ່ຈະໄດ້ຮັບຄວາມສະດວກສະບາຍກັບການເຂົ້າເຖິງການບໍລິການໄດ້ງ່າຍຂຶ້ນ. ປະຈຸບັນບໍລິສັດ LAPNet ມີທະນາຄານສະມາຊິກທັງໝົດຈຳນວນ 7 ທະນາຄານ ພາຍໃນ ແລະ 1 ບໍລິສັດຕ່າງປະເທດ.

### 3. ຈຸດປະສົງໃນການສ້າງຕັ້ງບໍລິສັດ

ເພື່ອປະຕິບັດຕາມນະໂຍບາຍຂອງພັກ ແລະ ລັດຖະບານ ໃນການຫັນໄປສູ່ທັນສະໄໝ, ຫຼຸດຜ່ອນການນຳໃຊ້ເງິນສົດ, ຫຼຸດຜ່ອນຕົ້ນທຶນໃນການຕິດຕັ້ງຕູ້ ATM ແລະ ເຄື່ອງ POS ແລະ ເພື່ອອຳນວຍຄວາມສະດວກໃຫ້ພໍ່ແມ່ປະຊາຊົນທີ່ເປັນລູກຄ້າຂອງທະນາຄານ.

### 4. ມູນຄ່າບໍລິສັດ

ທຶນຈົດທະບຽນມີທັງໝົດ 34.000.000.000 ກີບ (ສາມສິບສີ່ຕື້ກີບ) ໃນນັ້ນ, ທຄຕລ ຮ່ວມລົງທຶນ 20% ເທົ່າກັບ 6.800.000.000 ກີບ (ຫົກຕື້ແປດຮ້ອຍລ້ານກີບ).

### 5. ຜະລິດຕະພັນຂອງບໍລິສັດ

ໃຫ້ບໍລິການເປັນສື່ກາງໃນການຊໍາລະສະສາງລະຫວ່າງທະນາຄານພາຍໃນປະເທດເຊັ່ນ: ຜະລິດຕະພັນບັດ, ການໂອນເງິນ ແລະ ອື່ນໆ ຕາມການອານຸຍາດຈາກທະນາຄານແຫ່ງ ສປປ ລາວ.

## 6. ຄວາມສຳຄັນໃນການເຂົ້າຮ່ວມບໍລິສັດ

ການເຂົ້າຮ່ວມລົງທຶນ ໃນບໍລິສັດ **ລາວເນເຊີນນໍ ເພເມັ້ນ ເນັດເວີກ ຈຳກັດ** ຖືວ່າມີຄວາມສຳຄັນສູງ ເນື່ອງຈາກວຽກງານດັ່ງກ່າວນອນຢູ່ນະໂຍບາຍການພັດທະນາລະບົບຊຳລະສະສາງຂອງທະນາຄານແຫ່ງ ສປປ ລາວ, ເປັນການພັດທະນາພື້ນຖານໂຄງລ່າງດ້ານການຊຳລະສະສາງຂອງລະບົບທະນາຄານທຸລະກິດພາຍໃນປະເທດ. ເພື່ອອຳນວຍຄວາມສະດວກໃນການບໍລິການລູກຄ້າ, ຫຼຸດຜ່ອນຕົ້ນທຶນທີ່ຕິດພັນກັບການປະກອບວັດຖຸເຕັກນິກ ແລະ ການບຳລຸງຮັກສາລະບົບ ໃນໄລຍະຍາວ. ເຖິງຢ່າງໃດກໍ່ຕາມການລົງທຶນໃນບໍລິສັດດັ່ງກ່າວເຫັນວ່າມີມູນຄ່າສູງສົມຄວນ ອີກຢ່າງໜຶ່ງການລົງທຶນໃນບໍລິສັດອາດຈະບໍ່ທັນມີຜົນຕອບແທນໃນໄລຍະສັ້ນ, ແຕ່ໃນໄລຍະຍາວເຫັນວ່າມີຄວາມຈຳເປັນຫຼາຍ ເພື່ອຮັກສາຄວາມເປັນທະນາຄານແຖວໜ້າໃນລາວ, ຮັກສາສ່ວນແບ່ງຕະຫຼາດ ແລະ ຖານລູກຄ້າ ເນື່ອງຈາກວ່າບໍລິສັດດັ່ງກ່າວຈະເປັນຜູ້ຄຸ້ມຄອງໂຄງລ່າງພື້ນຖານ ການຊຳລະສະສາງລະຫວ່າງທະນາຄານພາຍໃນປະເທດ. ສະນັ້ນ, ເຫັນວ່າ ທຄຕລ ໃນນາມທີ່ເປັນຜູ້ນຳດ້ານທະນາຄານ ແລະ ການຫັນເປັນທັນສະໄໝ ໃນ ສປປ ລາວ ເໝາະສົມໃນການລົງທຶນບໍລິສັດດັ່ງກ່າວ ເພື່ອໃຫ້ ທຄຕລ ມີສ່ວນຮ່ວມໃນການກຳນົດທິດທາງນະໂຍບາຍການພັດທະນາລະບົບຊຳລະສະສາງ, ເພື່ອອຳນວຍຄວາມສະດວກແກ່ລູກຄ້າ ແລະ ຮັກສາຜົນປະໂຫຍດສູງສຸດຂອງ ທຄຕລ ໃນໄລຍະຍາວ.

# ໃບມອບສິດ
# Proxy

1. ຂ້າພະເຈົ້າ ............................................................................ ສັນຊາດ.............................................
I / We ............................................................................ nationality ...................................
ເຮືອນເລກທີ່ ............................ ບ້ານ ........................................ ເມືອງ ............ ............................
residing at ............................ Village .................................... District ............ ............................
ແຂວງ ........................................................Province....................................
ເປັນຜູ້ຖືຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
Being a shareholder of Banque Pour Le Commerce Exterieur Lao Public
ມີຮຸ້ນທີ່ຖືຈຳນວນ.............................................ຮຸ້ນຊຶ່ງເທົ່າກັບຈຳນວນສຽງທີ່ຈະລົງຄະແນນສຽງ
Holding a total number of ............................shares which are equivalent to the same number of votes

2. ຂໍມອບໝາຍ ທ່ານ/ທ່ານ ນາງ ......................................................... ອາຍຸ........................ປີ
Hereby assign Mr/Ms ......................................................... age ......................
ສັນຊາດ........................................................ຢູ່ເຮືອນເລກທີ່.....................................................
Nationality…………………………………….. residing at…………………………………………………
ບ້ານ................................................ ເມືອງ .................................... ແຂວງ ..... ...................................
Village ................................................ District ................................. Province..... ...................................

***ຫຼື / Or***

ມອບໝາຍ ສະມາຊິກສະພາບໍລິຫານອິດສະຫຼະ (ກະລຸນາເລືອກ 1 ທ່ານ):
assign the Independent BOD member below (please select one):

☐ ທ່ານ ຄຳສຸກ ສູນດາຣາ
Mr. Khamsouk Sundara

☐ ທ່ານຮອງສາສະດາຈານ ປອ. ພູເພັດ ກ້ຽວພິລາວົງ
Assoc. Prof. Dr. Phouphet Kyophilavong

ໃຫ້ເປັນຜູ້ຕາງໜ້າຂອງຂ້າພະເຈົ້າ ເພື່ອເຂົ້າຮ່ວມ ແລະ ລົງຄະແນນສຽງແທນຂ້າພະເຈົ້າຢູ່ໃນກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2018 ຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ, ທີ່ຈະຈັດຂຶ້ນໃນ ເວລາ 14:30 ໂມງ ຂອງວັນທີ 26 ເມສາ 2019.
To be my/our proxy to attend and vote on my/our behalf in the Annual General Shareholders' Meeting for year 2018 of the Banque Pour Le Commerce Exterieur Lao Public which will be held at 14:30 PM of 26 April 2019.

3. ຂ້າພະເຈົ້າ ອະນຸຍາດໃຫ້ຜູ້ຕາງໜ້າລົງຄະແນນສຽງແທນຂ້າພະເຈົ້າ ຢູ່ໃນກອງປະຊຸມດັ່ງນີ້ (ເລືອກເອົາໜຶ່ງ ຈາກສອງທາງເລືອກລຸ່ມນີ້)
I /We authorize the proxy to vote on my/our behalf in the Meeting as follows (**choose one from the two following options**):

1. ☐ ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະ ລົງຄະແນນສຽງໃນທຸກໆບັນຫາແທນຂ້າພະເຈົ້າ ຕາມທີ່ຜູ້ກ່ຽວເຫັນສົມຄວນ; ຫຼື
   To grant the proxy to consider and vote in all agendas on my/our behalf as the proxy may deem appropriate; *or*

2. ☐ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າດັ່ງນີ້ (ຖ້າເລືອກຂໍ້ນີ້, ກະລຸນາເລືອກລົງຄະແນນ **ເຫັນດີ ຫຼື ບໍ່ເຫັນດີ** ໃນທຸກໆວາລະລຸ່ມນີ້):
   To grant the proxy to vote as per my/our intention indicated in the followings (If you select this option, please choose to vote either ***approve*** or ***disapprove*** in every agenda):

ວາລະທີ 1: ລາຍງານຄວາມຄືບໜ້າການຈັດຕັ້ງມະຕິກອງປະຊຸມຄັ້ງຜ່ານມາ
Agenda 1: Report on the implementation on the last meeting resolutions
*(ບໍ່ມີການລົງຄະແນນສຽງ/No vote required)*

ວາລະທີ 2: ລາຍງານສະພາບພົ້ນເດັ່ນໃນການເຄື່ອນໄຫວດຳເນີນງານຂອງ ທຄຕລ ປະຈຳປີ 2018 ໂດຍຫຍໍ້
Agenda 2: A brief report on the business performance highlights of BCEL for the year 2018
*(ບໍ່ມີການລົງຄະແນນສຽງ/No vote required)*

ວາລະທີ 3: ພິຈາລະນາ ແລະ ຮັບຮອງເອົາຜົນການດຳເນີນທຸລະກິດ 2018
Agenda 3: To consider and approve the business performance results for the year 2018
☐ *ເຫັນດີ/approve* ☐ *ບໍ່ເຫັນດີ/disapprove*

ວາລະທີ 4: ພິຈາລະນາ ແລະ ຮັບຮອງເງິນປັນຜົນປະຈຳປີ 2018
Agenda 4: To consider and approve the dividends for the year 2018.
☐ *ເຫັນດີ/approve* ☐ *ບໍ່ເຫັນດີ/disapprove*

ວາລະທີ 5: ພິຈາລະນາ ແລະ ຮັບຮອງເອົາແຜນການປີ 2019
Agenda 5: To consider and approve the business plan for the year 2019
☐ *ເຫັນດີ/approve* ☐ *ບໍ່ເຫັນດີ/disapprove*

ວາລະທີ 6: ພິຈາລະນາ ແລະ ຮັບຮອງເອົາການແຕ່ງຕັ້ງຜູ້ກວດສອບອິດສະຫຼະປະຈຳປີ 2019.
Agenda 6: To consider and approve the appointment of independent auditor for the year 2019.
☐ *ເຫັນດີ/approve* ☐ *ບໍ່ເຫັນດີ/disapprove*

ວາລະທີ 7: ພິຈາລະນາ ແລະ ຮັບຮອງການລົງທຶນຂອງ ທຄຕລ ໃນການຮ່ວມສ້າງຕັ້ງບໍລິ ສັດ ລາວເນເຊີນນໍ ເພ ເມັ້ນ ເນັດເວີກ ຈຳກັດ
Agenda 7: To consider and approve the investment of BCEL in co-founding the Lao National Payment Network Co., LTD
☐ *ເຫັນດີ/approve* ☐ *ບໍ່ເຫັນດີ/disapprove*

4. ການລົງຄະແນນສຽງຂອງຜູ້ຕາງໜ້າທີ່ບໍ່ເປັນໄປຕາມໃບມອບສິດນີ້ ໃຫ້ຖືວ່າບໍ່ຖືກຕ້ອງ ແລະ ບໍ່ແມ່ນການລົງຄະແນນຂອງຂ້າພະເຈົ້າ.
Any votes made by the proxy contradicting to this Proxy shall be considered as invalid and shall not constitute my/our votes as the shareholder.

5. ໃນກໍລະນີທີ່ຂ້າພະເຈົ້າ ບໍ່ໄດ້ລະບຸຄວາມຕ້ອງການຂອງຕົນໃນການລົງຄະແນນສຽງໃນວາລະໃດໜຶ່ງ ຫຼື ລະບຸໄວ້ ບໍ່ຈະແຈ້ງ ໃຫ້ຖືວ່າຂ້າພະເຈົ້າລົງຄະແນນສຽງເຫັນດີ
In case I/we have failed to specify my/our voting intention in any agenda or not clearly specified, my/our vote in such agenda shall be deemed approved.

6. ທຸກການກະທຳໃດຂອງຜູ້ຕາງໜ້າໃນກອງປະຊຸມ ທີ່ເປັນໄປຕາມໃບມອບສິດນີ້ ໃຫ້ຖືວ່າຂ້າພະເຈົ້າ ໄດ້ກະທຳເອງທຸກປະການ.
Any action made by the proxy in the meeting in accordance with this Proxy, shall be deemed as having been performed by myself/ourselves in all respects.

ທີ່....................................................... ວັນທີ............../.........../2019.
Wrote at……………………………………..  date…………………….

**ເຊັນຜູ້ຖືຮຸ້ນທີ່ມອບໝາຍ** / signed by the shareholder

**ເຊັນຜູ້ຕາງໜ້າ /signed by the proxy**

**ໝາຍເຫດ/Remark:**

1. ຜູ້ຖືຮຸ້ນ ຈະຕ້ອງແຕ່ງຕັ້ງຜູ້ຕາງໜ້າພຽງຜູ້ດຽວເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນຕົນເອງ
   The shareholder is required to assign only one proxy to attend and vote in the meeting on the shareholder's behalf.
2. ໃບມອບສິດສະບັບນີ້ຈະຕ້ອງນຳໄປຈົດທະບຽນສານ ນຳສຳນັກງານທະບຽນສານທີ່ຢູ່ສະດວກສຳລັບທ່ານ ເພື່ອໃຫ້ຮັບປະກັນຜົນສັກສິດທາງກົດໝາຍ, ທະນາຄານມີສິດປະຕິເສດໃບມອບສິດໃດໆທີ່ບໍ່ໄດ້ຈົດທະບຽນສານ.
   This Proxy must be certified by your most convenient Court Notary Office to ensure its legal validity. BCEL may reject any Proxies or proxy authorizations without endorsement of the Court Notary Office.
3. ຜູ້ຕາງໜ້າ ຕ້ອງສະແດງເອກະສານຂອງຕົນເອງຕໍ່ ພະນັກງານປະຈຳໂຕະລົງທະບຽນ ຄື: ບັດປະຈຳຕົວ ຫຼື ປື້ມສຳມະໂນຄົວ ຫຼື ໜັງສືຜ່ານແດນ (ສຳລັບນັກລົງທຶນຕ່າງປະເທດ) ພ້ອມກັບສຳເນົາເອະສານປະເພດດຽວກັນນີ້ຂອງຜູ້ຖືຮຸ້ນ, ໃບມອບສິດສະບັບນີ້ ແລະ ໜັງສືເຊີນປະຊຸມ.
   The proxy must present to the officers at registration desk his/her valid ID Card, or family book or passport (in case of foreign investor) together with the copies of the same documents of the shareholder, this Proxy, and the Invitation to the Meeting.

# ຊີວະປະຫວັດຫຍໍ້



**ຊື່ ແລະ ນາມສະກຸນ:** **ທ່ານ ຄຳສຸກ ສູນດາຣາ**
**ສັນຊາດ:** **ລາວ**
**ວັນເກີດ:** **03 ມິຖຸນາ 1945**
**ພາສາ:** **ລາວ, ອັງກິດ, ຝຣັ່ງ**
**ເບີໂທລະສັບ:** **020 55514235**
**Email:** **Khamsouk_sd@yahoo.com**

## ***ປະຫວັດການສຶກສາ:***

- 1969 ອຸດົມສຶກສາ ແລະ ລະດັບປະລິນຍາຕີ ຈາກປະເທດອັງກິດສະຕຣາລີ, ມະຫາວິທະຍາໄລນິວຊາວເວລ.

## ***ປະສົບການການເຮັດວຽກ:***

- 04/2015 ເປັນທີ່ປຶກສາດ້ານການເງິນ ແລະ ການທະນາຄານ ຂອງບໍລິສັດ ລ້ານຊ້າງ ມິເນີໂຣ ຈຳກັດ (ເຊິ່ງເປັນບໍລິສັດໃນເຄືອຂອງກຸ່ມບໍລິສັດ ໂອເຊຍນາ ແຫ່ງເມືອງເມວເບີນ, ປະເທດອົດສະຕຣາລີ).
- 1995-1996 ເປັນທີ່ປຶກສາຜູ້ອຳນວຍການ ທີ່ອົງການການເງິນລະຫວ່າງປະເທດກຸ່ມພາກພື້ນອາຊີຕາເວັນອອກສ່ຽງໃຕ້, ທີ່ນະຄອນວໍຊິງຕັນ, ປະເທດອາເມລິກາ
- 1990-1994 & 1997 - ມີນາ 2005 ທະນາຄານແຫ່ງ ສ ປປ ລາວ
- 1976-1989 ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
- 1970-1975 ທະນາຄານພັດທະນາລາວ

## ***ການຝຶກອົບຮົມ:***

- 1993 ຮ່ວມຝຶກອົບຮົມທີ່ ມະຫາວິທະຍາໄລຈອດສ໌ທາວ ທີ່ນະຄອນ ວໍຊິງຕັນ, ປະເທດສະຫະລັດອາເມລິກາ, ສະຖາບັນທະນາຄານໂລກທີ່ນະຄອນວໍຊິງຕັນ, ສະຖາບັນຂອງອົງການການເງິນລະຫວ່າງປະເທດ ທີ່ນະຄອນວໍຊິງຕັນ ແລະ ປະເທດສິງກະໂປ
- 1985 ສະຖາບັນຄຸ້ມຄອງທະນາຄານແຫ່ງອິນເດຍ ທີ່ເມືອງປານາ, ປະເທດອິນເດຍ
- 1974 ສູນເຝິກອົບຮົມລະຫວ່າງປະເທດ ທີ່ເມືອງນາໂກຢາ, ປະເທດຍີ່ປຸ່ນ
- 1972 ອົບຮົມດ້ານເສດຖະສາດ ຈາກສະຖາບັນຄຸ້ມຄອງເສດຖະກິດຂອງອົງການສະຫະປະຊາຊາດທີ່ບາງກອກ, ປະເທດໄທ

***ຜົນງານການຂຽນ:*** *ຂຽນລາຍງານລະດັບຊາດ ກ່ຽວກັບການຄຸ້ມຄອງເງິນເຟີ້ ແລະ ລະບົບການຄຸ້ມຄອງແລກປ່ຽນເງິນຕາ ເພື່ອຮັບໃຊ້ການປຶກສາຫາລືກັບບັນດາປະເທດ ໃນພາກພື້ນ ESCAP.*

# ຊີວະປະຫວັດຫຍໍ້



ຊື່ ແລະ ນາມສະກຸນ: **ຣສຈ. ປອ. ພູເພັດ ກ້ຽວພິລາວົງ**

ສັນຊາດ : **ລາວ**

ວັນ ເດືອນ ປີເກີດ : **05 ກຸມພາ 1974**

ພາສາ: **ລາວ, ອັງກິດ, ຍີ່ປຸ່ນ**

**ເບີໂທລະສັບ: 020 55527321**

**Email: Phouphetkyophilavong@gmail.com**

**I. ປະຫວັດການສຶກສາ:**

- 2000-2003: ປະລິນຍາເອກເສດຖະສາດ, ມະຫາວິທະຍາໄລໂກເບ, ປະເທດຍີ່ປຸ່ນ
- 1998-2000: ປະລິນຍາໂທວິສະວະກຳໂຍທາ, ມະຫາວິທະຍາໄລໂອສະກາ, ປະເທດຍີ່ປຸ່ນ
- 1994-1998: ປະລິນຍາຕີວິສະວະກຳໂຍທາ, ມະຫາວິທະຍາໄລໂອສະກາ, ປະເທດຍີ່ປຸ່ນ

**II. ປະຫວັດການເຮັດວຽກ (1)**

- 2013-ປະຈຸບັນ: ຮອງຄະນະບໍດີ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ
- 2008-2013: ຫົວໜ້າພະແນກຄົ້ນຄວ້າ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ
- 2006-2008: ຮອງຫົວໜ້າພາກເສດຖະສາດ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ
- 2004-2006: ຮອງຫົວໜ້າພະແນກຄົ້ນຄ້ວາ, ຄະນະເສດຖະສາດແລະບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ
- 2003-2004: ອາຈານສອນ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ

**ປະຫວັດການເຮັດວຽກ (2)**

- 2017 ຮອງສາດສະດາຈານຮັບເຊີນ,ໂຮງຮຽນຫລັງປະລິນຍາຕີການສຶກສາການຮ່ວມມືສາກົນມະຫາວິທະຍາໄລໂກເບ, ປະເທດຍີ່ປຸ່ນ
- 2016/15 ອາຈານຮັບເຊີນ, ໂຮງຮຽນຫລັງປະລິນຍາຕີການບໍລິຫານ, ມະຫາວິທະຍາໄລກຽວໂຕ, ປະເທດຍີ່ປຸ່ນ
- 2013 ນັກຄົ້ນຄວ້າຮັບເຊີນອາເມລິກາ-ອາເຊັຍ, ພະແນກເສດຖະກິດ, ມະຫາວິທະຍາໄລຮາເວດ, ປະທດອາເມລິກາ
- 2011 ຮອງສາດສະດາຈານຮັບເຊີນ ມະຫາວິທະຍາໄລນັນຢັງ, ປະທດສິງກະໂປ
- 2010 ນັກຄົ້ນຄວ້າຮັບເຊີນ, ມະຫາວິທະຍາໄລລາວານ, ປະເທດຄານາດາ
- 2009 ອາຈານຮັບເຊີນ, ໂຮງຮຽນຫລັງປະລິນຍາຕີການພັດທະນາສາກົນ, ມະຫາວິທະຍາໄລນາໂກຍາ, ປະເທດຍີ່ປຸ່ນ
- 2008 ນັກຄົ້ນຄວ້າຮັບເຊີນ, ສູນຄົ້ນຄົ້ວເສດຖະກິດ, ມະຫາວິທະຍາໄລນາໂກຍາ, ປະເທດຍີ່ປຸ່ນ
- 2005 ນັກຄົ້ນຄວ້າຮັບເຊີນ, ສະຖາບັນພັດຖະນາເສດຖະກິດ, ປະເທດຍີ່ປຸ່ນ

## ລະບຽບສຳລັບການດຳເນີນກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈຳປີ 2018

## Rules for the Annual General Meeting of BCEL's Shareholders for the year 2018

### 1. ການລົງທະບຽນເພື່ອເຂົ້າຮ່ວມກອງປະຊຸມ/Registration for attending the meeting

ຜູ້ເຂົ້າຮ່ວມກອງປະຊຸມທຸກຄົນ ຕ້ອງລົງທະບຽນໃຫ້ຮຽບຮ້ອຍຕາມຂັ້ນຕອນທີ່ ທຄຕລ ກຳນົດໄວ້ ກ່ອນເຂົ້າຮ່ວມກອງປະຊຸມ ແລະ ຕ້ອງອະນຸຍາດໃຫ້ ທຄຕລ ສຳເນົາເອົາບັດປະຈຳຕົວ ຫຼື ໜັງສືຜ່ານແດນ ຫຼື ເອກະສານອື່ນໆທີ່ສາມາດໃຊ້ແທນໄດ້ ເພື່ອເອົາໄວ້ເປັນຫຼັກຖານ.

All attendees must complete registration in accordance with the procedures specified by BCEL before attending the meeting and allow BCEL to photocopy their ID cards or passports or other similar documents as evidence.

ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍ ຕ້ອງນຳເອົາໜັງສືແຈ້ງເຊີນເຂົ້າຮ່ວມກອງປະຊຸມທີ່ ອອກໃຫ້ໂດຍຕະຫຼາດຫຼັກຊັບລາວ (ທີ່ມີເຄື່ອງໝາຍບາໂຄດ) ມາແຈ້ງພ້ອມໃນເວລາລົງທະບຽນ. ກໍລະນີທີ່ບໍ່ມີໃບແຈ້ງສິດເຂົ້າຮ່ວມກອງປະຊຸມແລ້ວນັ້ນ ຈະຖືວ່າການລົງທະບຽນບໍ່ສຳເລັດ ແລະ ຈະສົ່ງຜົນໃຫ້ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ບໍ່ມີສິດລົງຄະແນນສຽງ, ຕັ້ງຄຳຖາມ ຫຼື ມີຄຳເຫັນຕໍ່ທີ່ປະຊຸມ.

Shareholders or proxies must bring and present to the registration desk the Invitation issued by the Lao Securities Exchange (containing bar code). In absence of such Invitation, the registration shall be deemed incomplete and shall lead such shareholders or proxies to lose their right to vote, question or make comments in the meeting.

ຜູ້ຕາງໜ້າ ຕ້ອງສະແດງເອກະສານຂອງຕົນເອງຕໍ່ພະນັກງານປະຈຳໂຕະລົງທະບຽນ ຄື: ບັດປະຈຳຕົວ ຫຼື ປື້ມສຳມະໂນຄົວ ຫຼື ໜັງສືຜ່ານແດນ (ສຳລັບນັກລົງທຶນຕ່າງປະເທດ) ພ້ອມກັບ ສຳເນົາເອກະສານປະເພດດຽວກັນນີ້ຂອງຜູ້ຖືຮຸ້ນ, ໃບມອບສິດສະບັບນີ້, ແລະ ໜັງສືເຊີນປະຊຸມ. ຖ້າເອກະສານເຫຼົ່ານີ້ເປັນພາສາຕ່າງປະເທດ ແມ່ນອະນຸຍາດໄດ້ສະເພາະເອກະສານທີ່ເປັນພາສາ ອັງກິດເທົ່ານັ້ນ.

The proxy must present to the officers at registration desk his/her valid ID Card, or family book or passport (in case of foreign investor) together with the copies of the same documents of the shareholder, letter of Proxy, and the Invitation to the Meeting. If these documents are in foreign languages, only the documents in English are acceptable.

### 2. ອົງປະຊຸມ/Quorum

ກອງປະຊຸມສາມາດດຳເນີນໄດ້ກໍ່ຕໍ່ເມື່ອມີ**ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ເຂົ້າຮ່ວມກອງປະຊຸມຢ່າງໜ້ອຍ** 2 **ຄົນຂຶ້ນໄປ ແລະມີຈຳນວນ**ຮຸ້ນທີ່**ຖືເກີນ** 51% ຂອງຈຳນວນຮຸ້ນ**ສາມັນ**ທັງໝົດ ຕາມທີ່ໄດ້ກຳນົດໄວ້ໃນ ກົດລະບຽບຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.

Shareholders ' meeting can commence only if the number of shareholders attending the meeting accounts for at least two shareholders and their shares shall be more than **51%** of the

total shares, pursuant to the Articles of Association of Banque pour le Commerce Exterieur Lao Public.

**3. ການດຳເນີນກອງປະຊຸມ/Rules for proceeding**

**3.1 ທ່ານປະທານສະພາບໍລິຫານ ທຄຕລ ເປັນປະທານກ່າວເປີດ ແລະ ນຳພາດຳເນີນກອງປະຊຸມ.**

The Chairman of BCEL's Board of Directors will preside over and lead the meeting.

**3.2 ທ່ານ ປະທານສະພາບໍລິຫານ ເປັນຜູ້ສະເໜີຫົວຂໍ້ຂອງແຕ່ລະວາລະ ແລະ ເປັນຜູ້ສັ່ງໂຫວດ ຄະແນນແຕ່ລະວາລະ.**

The Chairman will propose the title of each agenda and order the voting of each agenda.

**3.3 ຜູ້ອຳນວຍການໃຫຍ່ ທຄຕລ ເປັນຜູ້ດຳເນີນສະເໜີ ເນື້ອໃນຂອງແຕ່ ລະວາລະໃນກອງປະຊຸມ.**

The General Managing Director of BCEL will present details of each agenda to the meeting.

3.4 ຫຼັງຈາກທີ່ທ່ານຜູ້ອຳນວຍການ ໄດ້ສະເໜີເນື້ອໃນຂອງວາລະແລ້ວ, ປະທານກອງປະຊຸມຈະສະເໜີໃຫ້ຜູ້ຖືຮຸ້ນຫຼືຜູ້ຕາງ ໜ້າທີ່ມີຄຳຖາມ ຫຼື ຄຳເຫັນຕໍ່ວາລະທີ່ກຳລັງຖືກພິຈາລະນາຢູ່. ກໍລະນີມີຄຳຖາມ ທ່ານຜູ້ອຳນວຍການໃຫຍ່ຈະເປັນຜູ້ໃຫ້ຄຳອະທິບາຍຊີ້ແຈງ. ຈາກນັ້ນ, ຖ້າບໍ່ມີຄຳຖາມໃດໆຕໍ່ແລ້ວ ປະທານກອງປະຊຸມຈະສະເໜີໃຫ້ຜູ້ຖືຮຸ້ນຫຼືຜູ້ຕາງໜ້າລົງມະຕິຕໍ່ວາລະດັ່ງກ່າວ.

After the General Managing Director has presented details of each agenda, the Chairman will ask the Shareholders and Proxies to make necessary comments or questions. Should there is a question, the General Managing Director shall give the answer forthwith. Only when there is no any further question or comment, the Chairman shall ask the Shareholders and Proxies to vote on the agenda

3.5 ຜູ້ເຂົ້າຮ່ວມກອງປະຊຸມ ຕ້ອງປິດສຽງໂທລະສັບ ຫຼື ອຸປະກອນການສື່ສານທຸກຢ່າງ ແລະ ບໍ່ສົ່ງສຽງດັງລົບກວນ ຕະຫຼອດໄລຍະຂອງການດຳເນີນກອງປະຊຸມ.

All attendees must switch off the sound of their mobile phones or any communication devices and must not make any disturbing noise throughout the meeting.

**4. ພາສາທີ່ນຳໃຊ້ໃນກອງປະຊຸມ/**Language in the meeting

ພາສາທີ່ນຳໃຊ້ຢູ່ໃນກອງປະຊຸມແມ່ນພາສາລາວ

**The language used in the meeting is Lao language.**

**5. ຜູ້ມີສິດລົງຄະແນນສຽງ/**Persons eligible to vote

5.1 ມີແຕ່ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍຢ່າງຖືກຕ້ອງ ຊຶ່ງໄດ້ລົງທະບຽນເຂົ້າຮ່ວມກອງ ປະຊຸມຮຽບຮ້ອຍແລ້ວ ເທົ່ານັ້ນທີ່ຈະມີສິດລົງຄະແນນສຽງ.

Only the shareholders or proxies who have registered to attend the meeting are eligible to vote.

5.2 ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ບໍ່ໄດ້ລົງທະບຽນເຂົ້າຮ່ວມກອງປະຊຸມ ແລະ ຜູ້ເຂົ້າຮ່ວມອື່ນ ຈະບໍ່ມີ ສິດໃນການລົງຄະແນນສຽງ.

Any shareholders or proxies who have not registered to attend the meeting and other attendees will not be eligible to vote.

**6. ການລົງຄະແນນສຽງ/**Voting

ປະທານກອງປະຊຸມ ຈະເປັນຜູ້ສະເໜີວາລະທີ່ຕ້ອງການໃຫ້ລົງຄະແນນສຽງ ໂດຍຈະເຊີນ ພຽງແຕ່ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍ ທ່ານໃດທີ່ບໍ່ເຫັນດີຕໍ່ບັນຫາທີ່ກອງປະຊຸມໄດ້ນໍາ ສະເໜີເທົ່ານັ້ນລົງຄະແນນສຽງ ເພື່ອຄວາມສະດວກໃນການນັບຄະແນນສຽງ (ໝາຍຄວາມວ່າ ຜູ້ຖືຮຸ້ນທ່ານໃດທີ່ເຫັນດີຕໍ່ການສະເໜີດັ່ງກ່າວ ກໍບໍ່ຈໍາເປັນຕ້ອງລົງຄະແນນສຽງໃດໆ).

The Chairman of the meeting will propose the agendas that require voting, and only the shareholders or proxies who DO NOT AGREE with the matters proposed by the meeting are invited to vote so as to facilitate vote counting process (meaning that for those who agree with such matters are not necessary to cast a vote).

**7. ຜົນສັກສິດຂອງການລົງຄະແນນສຽງ/**Effectiveness of voting

7.1 **ສໍາລັບ ການລົງມະຕິທົ່ວໄປ**, ການລົງຄະແນນສຽງບໍ່ເຫັນດີຈະມີຜົນສັກສິດ ກໍຕໍ່ເມື່ອມີຄະແນນສຽງຫລາຍກວ່າເຄິ່ງໜຶ່ງຂອງຈໍານວນຮຸ້ນ ທຄຕລ ທັງໝົດໃນທີ່ປະຊຸມ.

For ordinary resolutions, the "Disapprove votes" will become effective only if such votes account for more than half of the total number of BCEL shares attending the meeting

7.2 **ສໍາລັບການລົງມະຕິສະເພາະ**, ການລົງຄະແນນສຽງບໍ່ເຫັນດີຈະມີຜົນສັກສິດ ກໍຕໍ່ເມື່ອມີຄະແນນສຽງຫລາຍກວ່າ **ໜຶ່ງສ່ວນສາມຂອງຈໍານວນຄະແນນສຽງທັງໝົດທີ່ເຂົ້າຮ່ວມໃນກອງປະຊຸມ ແລະ ມີຫຼາຍກວ່າ** 20% ຈໍານວນຮຸ້ນ ທຄຕລ ທັງໝົດ.

For special resolution, the "Disapprove votes" will become effective only if such votes account for more than one third of total votes in the meeting and cover more than 20% of the total number of BCEL shares

7.3 ທຸກບັດລົງຄະແນນສຽງ "ບໍ່ເຫັນດີ" ຕໍ່ວາລະໃດໜຶ່ງ ທີ່ຖືກສົ່ງໃຫ້ທີ່ປະຊຸມ ຫຼັງຈາກທີ່ກອງປະຊຸມ ໄດ້ປະກາດຜົນ ການລົງຄະແນນຂອງວາລະນັ້ນແລ້ວ, ຈະຖືວ່າເປັນບັດລົງຄະແນນສຽງທີ່ໃຊ້ບໍ່ໄດ້.

Any and All "Disapprove votes" in any Agenda which are submitted to the Meeting after the Meeting has already announced the voting result of such Agenda shall be null and void.

**8. ການແຈ້ງຜົນການລົງຄະແນນສຽງ/Notification of voting result**

ຜູ້ເຂົ້າຮ່ວມກອງປະຊຸມ ຈະໄດ້ຮັບແຈ້ງກ່ຽວກັບຜົນການນັບຄະແນນຢູ່ໃນທີ່ປະຊຸມເລີຍ ໂດຍ ການນັບຄະແນນສຽງ ຈະຖືເອົາໜຶ່ງຮຸ້ນ ເທົ່າກັບໜຶ່ງຄະແນນສຽງ.

Attendees will be informed about the voting result forthwith in the meeting with one share equals one vote.

## 9. ການສະເໜີຄຳຖາມ/Questions

9.1 ປະທານກອງປະຊຸມ ຈະສະເໜີໃຫ້ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍຢ່າງຖືກຕ້ອງ ມີຄຳຖາມ ຫຼື ສະແດງຄຳເຫັນທີ່ບໍ່ນອນໃນວາລະຂອງກອງປະຊຸມ, ໃນຕອນທ້າຍກອງປະຊຸມພາຍຫຼັງທີ່ສຳເລັດຄົບຖ້ວນທຸກວາລະແລ້ວ. ສຳລັບຜູ້ເຂົ້າຮ່ວມອື່ນໆ ຈະບໍ່ມີສິດສະເໜີຄຳຖາມ ຫຼື ມີຄຳເຫັນໃນທີ່ປະຊຸມ, ຍົກເວັ້ນກໍລະນີທີ່ປະທານ ກອງປະຊຸມ ໄດ້ສະເໜີໃຫ້ຜູ້ເຂົ້າຮ່ວມ ດັ່ງກ່າວ ປະກອບຄຳເຫັນຕໍ່ທີ່ປະຊຸມ.

The chairman of the meeting will ask the shareholders or proxies to question or make comments on the issues which are not included in the agenda of the meeting, after the meeting has completed its all agenda. other attendees are not eligible to question or make any comments, unless the Chairman asks such attendees to question or make comments in the meeting.

9.2 ເມື່ອມີການສະເໜີຈາກປະທານກອງປະຊຸມແລ້ວນັ້ນ, ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ປະສົງຈະມີ ຄຳຖາມ ຫຼື ສະແດງຄຳເຫັນຕໍ່ທີ່ປະຊຸມ ຕ້ອງຍົກມືຂຶ້ນ ພ້ອມທັງສະແດງເຄື່ອງໝາຍຕາມທີ່ ທຄຕລ ກຳນົດໃຫ້ ເພື່ອສະແດງວ່າແມ່ນຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍຢ່າງແທ້ຈິງ. ຖ້າຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ທີ່ໄດ້ຮັບມອບໝາຍ ຫາກບໍ່ສະແດງເຄື່ອງໝາຍດັ່ງກ່າວແລ້ວນັ້ນ ປະທານກອງປະຊຸມ ຫຼື ຄະນະອຳນວຍການ ທຄຕລ ຫຼື ຄະນະຮັບຜິດຊອບກອງປະຊຸມ ມີສິດສະເໜີຄັດຄ້ານຄຳຖາມ ຫຼື ຄຳເຫັນຂອງຜູ້ກ່ຽວ ແລະ ກອງປະຊຸມ ຈະບໍ່ມີພັນທະໃນການຕອບຄຳຖາມຂອງຜູ້ກ່ຽວໃນກໍລະນີ ດັ່ງກ່າວ.

Having been asked by the Chairman, any shareholders or proxies desirous to question or make comments in the meeting must raise their hands and show the symbol as given by BCEL to confirm that they are truly shareholders proxies. Should the shareholders or proxies do not show such symbol, the Chairman or BCEL Directors, or Committee in charge of the meeting may reject questions or comments made by the shareholders or proxies, and in this case the meeting shall not be obliged to answer such questions.

## 10. ການແຈ້ງມະຕິຂອງກອງປະຊຸມ/Notification of resolutions of the meeting

ພາຍຫຼັງສິ້ນສຸດການດຳເນີນຄົບຖ້ວນທຸກວາລະ ແລະ ການລົງຄະແນນສຽງແລ້ວ, ປະທານ ກອງປະຊຸມ ຈະແຈ້ງໂດຍຫຍໍ້ໃຫ້ຜູ້ເຂົ້າຮ່ວມ ກອງປະຊຸມຮັບຊາບກ່ຽວກັບມະຕິຂອງກອງປະຊຸມ. ປະທານກອງປະຊຸມສາມາດສະເໜີໃຫ້ກອງເລຂາເປັນຜູ້ແຈ້ງມະຕິດັ່ງກ່າວແທນໄດ້.

After all agenda and voting have been completed, the Chairman of the meeting will notify the attendees of the brief resolutions of the meeting. Alternatively, the Chairman may ask the secretariat to present the brief resolutions of the meeting.

## ຄໍາແນະນໍາກ່ຽວກັບເອກະສານ ແລະ ຫຼັກຖານທີ່ຕ້ອງນໍາມາສະເໜີໂຕເພື່ອເຂົ້າຮ່ວມກອງປະຊຸມ
## Instruction about the documents and evidence to be presented prior to attending the meeting

ເພື່ອຄວາມສະດວກໃນການລົງທະບຽນຜູ້ເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈໍາປີ 2018 ຂອງ ທະນາຄານການຄ້າຕ່າງ ປະເທດລາວ ມະຫາຊົນ, ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ທີ່ຈະເຂົ້າຮ່ວມກອງປະຊຸມ ກະລຸນານໍາເອົາໜັງສືເຊີນປະຊຸມ, ໃບເຂົ້າຮ່ວມກອງປະຊຸມທີ່ອອກໃຫ້ໂດຍຕະຫຼາດຫຼັກຊັບລາວ ແລະ ໃບມອບສິດ (ສໍາລັບຜູ້ຕາງໜ້າ) ມາພ້ອມເອກະສານທີ່ສາມາດນໍາໃຊ້ຢັ້ງຢືນຕົນເອງ ຕາມແຕ່ລະກໍລະນີດັ່ງນີ້:

For convenience in registration process to attend the Annual General Shareholders ' Meeting for the Year 2018 of Banque Pour Le Commerce Exterieur Lao Public, the shareholders or the proxies who will attend the Meeting are required to bring the Invitation to the Meeting, the Letter for attending the meeting issued by the Lao Securities Exchange and the Proxy (applicable for the proxy only) together with the documents for proof of identity as indicated for each circumstance below:

**1. ຜູ້ເຂົ້າຮ່ວມທີ່ເປັນບຸກຄົນ / attendees who are natural persons**

ໃຫ້ນໍາເອົາເອກະສານໃດໜຶ່ງຂອງຕົນດັ່ງຕໍ່ໄປນີ້ ມາສະແດງເວລາລົງທະບຽນ

Shall present one of the following documents of their own at the time of registration.

1.1. ບັດປະຈໍາຕົວ/identification card

1.2. ສໍາມະໂນຄົວ/family book

1.3. ໜັງສືຜ່ານແດນ (ສໍາລັບນັກລົງທຶນຕ່າງປະເທດ)/passport (for foreign investors)

**2. ຜູ້ເຂົ້າຮ່ວມທີ່ເປັນນິຕິບຸກຄົນ / attendees who are legal persons**

ໃຫ້ນໍາເອົາເອກະສານໃດໜຶ່ງທີ່ກໍານົດໄວ້ໃນຂໍ້ 1 ເທິງນີ້ ພ້ອມກັບເອກະສານໃດໜຶ່ງດັ່ງຕໍ່ໄປນີ້ ມາສະແດງ ເວລາລົງທະບຽນ:

Shall present one of the documents as given in 1. above plus one of the following documents at the time of registration:

2.1. ໃບອະນຸຍາດລົງທຶນ/ investment license

2.2. ໃບທະບຽນວິສາຫະກິດ/ Certificate of Enterprise Registration (Affidavit)

2.3. ໃບທະບຽນອາກອນສະບັບຫຼ້າສຸດ/ most recent Tax Certificate

ສໍາລັບຜູ້ເຂົ້າຮ່ວມທີ່ບໍ່ແມ່ນຜູ້ອໍານວຍການ ຕ້ອງໄດ້ນໍາເອົາໃບມອບສິດຈາກຜູ້ອໍານວຍການທີ່ມີສິດອໍານາດ ມາພ້ອມຕື່ມອີກ

For attendee who is not the authorized director shall have the Proxy as attached hereto signed by the authorized director.

ເອກະສານ ແລະ ຫຼັກຖານທີ່ຕ້ອງນໍາມາສະເໜີໂຕ ເພື່ອເຂົ້າຮ່ວມກອງປະຊຸມຊຶ່ງເປັນພາສາຕ່າງປະເທດ ຕ້ອງແປເປັນພາສາລາວ ໂດຍມີການເຊັນຢັ້ງຢືນຄວາມຖືກຕ້ອງໃນການແປຈາກບໍລິສັດແປພາສາທີ່ໜ້າເຊື່ອຖືໄດ້. ສໍາລັບພາສາຕ່າງ ປະເທດແມ່ນອະນຸຍາດໃຫ້ສໍາລັບພາສາອັງກິດເທົ່ານັ້ນ. ທຄຕລ ມີສິດປະຕິເສດເອກະສານອ້າງອີງໃດໆ ທີ່ບໍ່ເປັນໄປຕາມ ການກໍານົດນີ້.

All documents and evidence in a foreign language which are required to present prior to attending the Meeting must be translated into Lao language and the translation shall be certified by an acceptable translation company. The foreign language is permitted only for English. BCEL has the right to reject any documents contradicting this provision.

# ຄໍາແນະນໍາ ກ່ຽວກັບ ການລົງຄະແນນສຽງ
# Vote Instruction

1. ຜູ້ເຂົ້າຮ່ວມກອງປະຊຸມ ຈະໄດ້ຮັບບັດລົງຄະແນນສຽງໃນທຸກໆວາລະ ທີ່ຕ້ອງການໃຫ້ມີການລົງຄະແນນສຽງ ໃນເວລາລົງທະບຽນເຂົ້າຮ່ວມກອງປະຊຸມ. ການລົງຄະແນນສຽງໂດຍຜູ້ຕາງໜ້າ ຊຶ່ງຜູ້ຖືຮຸ້ນທີ່ຜູ້ມອບໝາຍສິດ ໄດ້ລະບຸ ຢ່າງຈະແຈ້ງແລ້ວກ່ຽວກັບການລົງຄະແນນໃນແຕ່ລະວາລະ ທະນາຄານ ຈະບັນທຶກການລົງຄະແນນສຽງ ໃນເວລາ ລົງທະບຽນ ໂດຍທີ່ຜູ້ຕາງໜ້າຈະບໍ່ຕ້ອງລົງແນນສຽງອີກ.
The attendees will be given a ballot for voting in each agenda requiring a vote at the time of registration. For the case of proxy in which the voting in each agenda has been clearly specified by the shareholder in the Proxy, BCEL will record such votes at the time of the registration and the proxy will not be required to vote.
2. ກອງປະຊຸມ ຈະເຊີນພຽງແຕ່ຜູ້ຖືຮຸ້ນທ່ານໃດທີ່ ບໍ່ເຫັນດີ ຕໍ່ບັນຫາທີ່ກອງປະຊຸມໄດ້ນໍາສະເໜີເທົ່ານັ້ນ ລົງຄະແນນສຽງ (ໝາຍຄວາມວ່າ ຜູ້ຖືຮຸ້ນທ່ານໃດທີ່ ເຫັນດີຕໍ່ການແຕ່ງຕັ້ງດັ່ງກ່າວ ກໍບໍ່ຈໍາເປັນຕ້ອງລົງຄະແນນສຽງໃດໆ).
Only the shareholders who DO NOT AGREE with the matters proposed by the meeting are invited to vote (meaning that for those who agree with such appointment are not necessary to make any vote)
3. ໃນການລົງຄະແນນສຽງ ຂໍໃຫ້ທ່ານປະກອບຂໍ້ມູນໃສ່ບັດລົງຄະແນນສຽງທີ່ໄດ້ແຈກຢາຍໃຫ້. ໃນນັ້ນ ຕ້ອງໄດ້ລະບຸຢ່າງຈະແຈ້ງກ່ຽວກັບຊື່ ແລະ ນາມສະກຸນຂອງທ່ານ, ຈໍານວນຮຸ້ນ ທຄຕລ ທີ່ທ່ານຖືຢູ່ ແລະ ໃຫ້ໝາຍຕີນກາໃສ່ຫ້ອງ ບໍ່ເຫັນດີ.
To vote, kindly fill in the distributed ballot in which you must specify clearly about your name and surname, and the total number of BCEL shares you are holding and mark a cross in the Disapprove box.
4. ຫລັງຈາກທ່ານລົງຄະແນນສຽງຮຽບຮ້ອຍແລ້ວ ຂໍໃຫ້ທ່ານຍົກບັດດັ່ງກ່າວຂຶ້ນ ເພື່ອໃຫ້ຄະນະຮັບຜິດຊອບເກັບເອົາ ແລະ ຮອບຮວມຄະແນນສຽງ.
After you have clearly casted your vote, kindly raise your hand with the ballot, so the organizers can take the ballot and count the votes.
5. ທ່ານຈະໄດ້ຮັບແຈ້ງກ່ຽວກັບຜົນການນັບຄະແນນຢູ່ໃນທີ່ປະຊຸມເລີຍ ໂດຍການນັບຄະແນນສຽງຈະຖືເອົາໜຶ່ງຮຸ້ນເທົ່າກັບໜຶ່ງຄະແນນສຽງ.
You will be informed about the voting result right in the meeting with one share equals one vote.
6. ການລົງຄະແນນສຽງບໍ່ເຫັນດີຈະມີຜົນສັກສິດ ກໍຕໍ່ເມື່ອມີຄະແນນສຽງຫລາຍກວ່າເຄິ່ງໜຶ່ງຂອງຈໍານວນຮຸ້ນ ທຄຕລ ທັງໝົດໃນທີ່ປະຊຸມ.
The Disapproval votes will become effective only if such votes account for more than half of the total number of BCEL shares attending the meeting.

**ໝາຍເຫດ/Remark:**

1. ຜູ້ເຂົ້າຮ່ວມທີ່ບໍ່ໄດ້ລົງທະບຽນເຂົ້າປະຊຸມ ຈະບໍ່ມີສິດໃນການລົງຄະແນນສຽງ.
Any attendees who failed to make registration will not be eligible to votes.
2. ທຸກບັດລົງຄະແນນສຽງບໍ່ເຫັນດີຕໍ່ວາລະໃດໜຶ່ງ ທີ່ຖືກສົ່ງໃຫ້ທີ່ປະຊຸມ ຫຼັງຈາກທີ່ກອງປະຊຸມໄດ້ປະກາດຜົນການລົງຄະແນນຂອງວາລະນັ້ນແລ້ວ, ຈະຖືວ່າເປັນບັດລົງຄະແນນສຽງທີ່ໃຊ້ບໍ່ໄດ້.
All disapprove votes in any Agenda which is submitted to the Meeting after the Meeting has announced the voting result of such Agenda shall be deemed invalid.

# ແຜນທີ່ສະຖານທີ່ຈັດກອງປະຊຸມຜູ້ຖືຮຸ້ນ ທຄຕລ/ BCEL Shareholders' Meeting

